## ສະຫະພັນບານເຕະແຫ່ງຊາດລາວ

# ກົດລະບຽບການຈັດການແຂ່ງຂັນກິລາບານເຕະ

## ລາຍການ: ເຍົາວະຊົນຮຸ່ນອາຍຸບໍ່ເກີນ 19 ປີ ປະຈຳປີ 2025

## LFF U-19 CHAMPIONSHIP 2025

## Competition Regulations



ສໍານັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານທ້ອຍທົ່ງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

# ສາລະບານ


ພາກທີ I ........ 1

ພາກທີ II ........ 5

ໜ້າທີ່ ແລະ ຄວາມຮັບຜິດຊອບໃນການບໍລິຫານຈັດການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ . 5

ພາກທີ III ........ 9

ຂໍ້ກຳນົດການເຂົ້າຮ່ວມການແຂ່ງຂັນ, ການຖອນອອກຈາກການແຂ່ງຂັນ, ການຢຸດຕິເຂົ້າຮ່ວມການແຂ່ງຂັນ, ຕາຕະລາງແຂ່ງຂັນ ແລະ ຮູບແບບການແຂ່ງຂັນ ........ 9

ພາກທີ IV ........ 13

ກະຕິກາ ແລະ ລະບຽບທີ່ໃຊ້ຄວບຄຸມການແຂ່ງຂັນບານເຕະ ເຍົາວະຊົນຮຸ່ນອາຍຸບໍ່ເກີນ 19 ປີ ........ 13

ພາກທີ V ........ 18

ຄຸນສົມບັດ ແລະ ພາລະບົດບາດຂອງນັກກິລາ, ເຈົ້າໜ້າທີ່ສະໂມສອນ ແລະ ການລົງທະບຽນເຂົ້າຮ່ວມການແຂ່ງຂັນ ........ 18

ພາກທີ VI ........ 23

ມາດຕະການລົງໂທດການກະທຳຜິດກະຕິກາການແຂ່ງຂັນ, ການປະທ້ວງ ແລະ ການອຸທອນ (ປັບປຸງ) ........ 23

ພາກທີ VII ........ 27

ບົດບັນຍັດສຸດທ້າຍ ........ 27

ຂໍ້ກຳນົດເພີ່ມເຕີມທີ 1 ........ 28

ນະໂຍບາຍອຸດໜູນສະໂມສອນ, ເງິນລາງວັນ ແລະ ລາງວັນໃນການແຂ່ງຂັນ ........ 28

ຂໍ້ກຳນົດເພີ່ມເຕີມທີ 2 ........ 26

ຕົວຢ່າງສັນຍາວ່າຈ້າງ ........ 29

ຂໍ້ກຳນົດເພີ່ມເຕີມທີ 3 ........ 30

ຕົວຢ່າງໃບອະນຸຍາດຜູ້ປົກຄອງ ........ 30

ອະລຳພະບົດ ........ 31

# ຄຳນຳ

ອີງຕາມກົດລະບຽບພາຍໃນຂອງ ສະຫະພັນບານເຕະແຫ່ງຊາດລາວ (ສຕລ) ເພື່ອເຮັດໃຫ້ການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ປະຈຳປີ 2025 ດຳເນີນໄປຢ່າງສອດຄ່ອງກັບການເຄື່ອນໄຫວການແຂ່ງຂັນ ແລະ ເປັນລະບຽບໃນການຄຸ້ມຄອງການແຂ່ງຂັນບານເຕະເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ປະຈຳປີ 2025.

ກົດລະບຽບການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ປະຈຳປີ 2025. ແມ່ນນິຕິກຳທີ່ສຳຄັນທີ່ທຸກສະໂມສອນບານເຕະທີ່ເຂົ້າຮ່ວມການແຂ່ງຂັນ, ເຈົ້າໜ້າທີ່ຮັບຜິດຊອບການແຂ່ງຂັນ, ບັນດາບຸກຄະລາກອນຈັດການແຂ່ງຂັນທີ່ໄດ້ລົງທະບຽນ ແລະ ຮັບຮອງຈາກ ສຕລ ທີ່ມີສ່ວນກ່ຽວຂ້ອງກັບການຈັດການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ປະຈຳປີ 2025 ຕ້ອງໄດ້ປະຕິບັດຕາມຢ່າງເຂັ້ມງວດ.

ສະຫະພັນບານເຕະແຫ່ງຊາດລາວມີພາລະບົດບາດໃນການຄຸ້ມຄອງ, ສ້າງແຜນ ແລະ ຈັດການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ຢູ່ພາຍໃນ ສປປ ລາວ. ດັ່ງນັ້ນ, ສຕລ ຈຶ່ງໄດ້ສ້າງກົດລະບຽບການແຂ່ງຂັນສະບັບນີ້ຂຶ້ນ ໂດຍມີຈຸດປະສົງເພື່ອຮັບຮອງໃຫ້ການເຄື່ອນໄຫວແຂ່ງຂັນບານເຕະທີຈັດຂຶ້ນໂດຍ ສະຫະພັນບານເຕະແຫ່ງຊາດລາວ ໃນທົ່ວປະເທດມີພື້ນຖານທາງດ້ານນິຕິກຳ ແລະ ຮັບຮອງການພັດທະນາກິລາບານເຕະ ໃຫ້ມີປະສິດທິພາບ ແລະ ກ້າວໜ້າຂຶ້ນໄປເລື້ອຍໆ.

ການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ປະຈຳປີ 2025 ແມ່ນການແຂ່ງຂັນບານເຕະລະດັບເຍົາວະຊົນ ຂອງສະໂມສອນທີ່ ຈັດຂຶ້ນຢູ່ໃນ ສປປ ລາວ. ໂດຍມີຈຸດປະສົງໃນການພັດທະນານັກກິລາບານເຕະພາຍໃນເພື່ອສະໜອງໃຫ້ກັບທີມຊາດລາວ ໃນແຕ່ລະຮຸ່ນອາຍຸ ແລະ ສົ່ງເສີມສັງຄົມໃຫ້ເຂົ້າໃຈເຖິງຄວາມສຳຄັນຂອງການພັດທະນາບຸກຄະລາກອນກິລາອາຊີບພາຍ ໃນຂອງ ສປປ ລາວ.

## ພາກທີ I

**ມາດຕາ 1: ຄຳນິຍາມ ແລະ ການຕີຄວາມໝາຍ**

**LFF (LAO FOOTBALL FEDERATION):** ໝາຍເຖິງສະຫະພັນບານເຕະແຫ່ງຊາດລາວ ໂດຍມີໂຕຫຍໍ້ທາງການໃນພາສາລາວແມ່ນ "ສຕລ".

**FIFA (The Fédération Internationale de Football Association):** ໝາຍເຖິງສະຫະພັນບານເຕະນາໆຊາດ.

**AFC (Asian Football Confederation):** ໝາຍເຖິງສະຫະພັນບານເຕະທະວີບອາຊີ.

**L1 (Lao League 1):** ລາວລີກ 1 ແມ່ນການແຂ່ງຂັນບານເຕະແບບເຄິ່ງອາຊີບຂອງສະໂມສອນບານເຕະ ລະດັບສູງສຸດໃນ ສປປ ລາວ.

**L2 (Lao League 2):** ລາວລີກ 2 ແມ່ນການແຂ່ງຂັນບານເຕະແບບສະໝັກຫຼິ້ນຂອງສະໂມສອນບານເຕະທີ່ຈັດຂຶ້ນໃນທຸກໆແຂວງທົ່ວປະເທດ

**LPM CUP (The Lao Prime Minister Cup):** (ປັບປຸງ) ການແຂ່ງຂັນບານເຕະຊີງຂັນ ພະນະທ່ານນາຍົກລັດຖະມົນຕີ ແມ່ນການແຂ່ງຂັນບານເຕະແບບເຄິ່ງອາຊີບຂອງສະໂມສອນບານເຕະ ລະດັບລີກ 1 ແລະ ລີກ 2 ໃນ ສປປ ລາວ.

**U-19 CHAMPIONSHIP**: ການແຂ່ງຂັນບານເຕະເຍົາວະຊົນຮຸ່ນອາຍຸບໍ່ເກີນ 19 ປີ ແມ່ນສະໂມສອນໃນລາວລີກ 1 ປີ 2024-2025 ຈະໄດ້ຮັບບຸລິມະສິດໃນການເຂົ້າຮ່ວມການແຂ່ງຂັນ ແລະ ສະໂມສອນ ທີ່ມີເງື່ອນໄຂໃນການເຂົ້າຮ່ວມ.

**ການປະທ້ວງ (Protest):** ໝາຍເຖິງການໂຕ້ແຍ້ງບັນຫາໃດໆຫຼັງຈາກສິ້ນສຸດການແຂ່ງຂັນທີ່ກ່ຽວຂ້ອງກັບສິດ ແລະ ຄຸນສົມບັດ, ການປະພຶດປະຕິບັດໂຕຂອງນັກກິລາ, ຄະນະຄູຝຶກ, ຄະນະບໍລິຫານງານຂອງສະໂມສອນ ແລະ ສະໂມສອນ ທີ່ເຂົ້າຮ່ວມການແຂ່ງຂັນ, ວຽກງານ ເຕັກນິກຈັດການແຂ່ງຂັນຂອງຄະນະກຳມະການຈັດການແຂ່ງຂັນ ແລະ ນັ້ນບໍ່ເປັນໄປຕາມລະບຽບສະບັບນີ້.

**ການອຸທອນ (Appeal):** ໝາຍເຖິງການຮຽກຮ້ອງສິດ, ເຊິ່ງຊີ້ແຈ້ງເປັນລາຍລັກອັກສອນພ້ອມດ້ວຍເຫດຜົນທີ່ເປັນຮູບປະທຳຈາກສະໂມສອນທີ່ ເປັນສະມາຊິກຂອງການແຂ່ງຂັນທີ່ບໍ່ເຫັນດ້ວຍກັບການຕັດສິນລົງໂທດໃນກໍລະນີໃດໜຶ່ງຂອງຄະນະກຳມະການລະບຽບວິໄນຂອງສະຫະພັນບານເຕະແຫ່ງຊາດລາວຕໍ່ກັບບຸກຄະລາກອນທີ່ກ່ຽວຂອງກັບສະໂມສອນ ຫຼື ສະໂມສອນເອງເພື່ອໃຫ້ຄະນະ ກຳມະການອຸທອນຂອງ ສຕລ ພິຈາລະນາຄືນໃໝ່.

**ອະນຸກຳມະການຈັດການແຂ່ງຂັນ:** ໝາຍເຖິງຄະນະຈັດການແຂ່ງຂັນປະຈຳ ສຕລ ໂດຍມີໜ່ວຍງານຫຼັກຄືພະແນກຈັດການ ແຂ່ງຂັນທີ່ຖືກແຕ່ງຕັ້ງໂດຍ ສຕລ.

**ລະບົບອົງການຕຸລາການຂອງ ສຕລ (The Judiciary Committee):** ໝາຍເຖິງອະນຸກຳມະການວິໄນ ແລະ ອະນຸກຳມະການອຸທອນ.

**ລະບຽບການແຂ່ງຂັນ (Competition Regulations):** ໝາຍເຖິງບັນດາກົດລະບຽບທີ່ກ່ຽວຂ້ອງກັບການແຂ່ງຂັນບານເຕະເຍົາວະຊົນຮຸ່ນອາຍຸບໍ່ເກີນ 19 ປີ ແລະ ສະບັບແກ້ໄຂເພີ່ມເຕີມ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

**ເຈົ້າໜ້າທີ່ຈັດການແຂ່ງຂັນ (Match Officials):** ໝາຍເຖິງບັນດາບຸກຄະລາກອນຈັດການແຂ່ງຂັນທີ່ໄດ້ລົງທະບຽນ ແລະ ຮັບຮອງຈາກ ສຕລ ເຊັ່ນ:

1. ກຳມະການຕັດສິນ (Referee)
2. ກຳມະການຊ່ວຍ (Assistant Referees)
3. ກຳມະການທີ 4 (Fourth Official)
4. ກຳມະການຊ່ວຍ 5 ແລະ 6 (AAR ຫຼື Additional Assistant Referee)
5. ຜູ້ປະເມີນກຳມະການຕັດສິນ (Referee Assessor)
6. ຜູ້ຄວບຄຸມການແຂ່ງຂັນ (Match Commissioner)
7. ຜູ້ຊ່ວຍຜູ້ຄວບຄຸມການແຂ່ງຂັນ (LGC ຫຼື Local General Coordinator)
8. ເຈົ້າໜ້າທີ່ອື່ນໆທີ່ໄດ້ຮັບການແຕ່ງຕັ້ງຈາກອະນຸກຳມະການຈັດການແຂ່ງຂັນບານເຕະເຍົາວະຊົນຮຸ່ນອາຍຸບໍ່ເກີນ 19ປີ ປະຈຳ ສຕລ.

**ເຈົ້າໜ້າທີ່ສະໂມສອນ (Team Officials):** ໝາຍເຖິງບຸກຄະລາກອນຂອງສະໂມສອນທີ່ມີຕຳແໜ່ງດັ່ງນີ້:

1. ຜູ້ຈັດການສະໂມສອນ (Team Manager)
2. ຫົວໜ້າຄູຝຶກ (Head Coach)
3. ຜູ້ຊ່ວຍຫົວໜ້າຄູຝຶກ (Assistant Coach)
4. ຄູຝຶກຜູ້ຮັກສາປະຕູ (GK Coach)
5. ແພດປະຈຳສະໂມສອນ (Medical or Doctor)
6. ນັກກາຍະພາບບຳບັດ (Physio Therapist)
7. ເຈົ້າໜ້າທີ່ສື່ມວນຊົນ (Team Media Officer)
8. ປະທານສະໂມສອນ (President/Chairman)
9. ຜູ້ອຳນວຍການເຕັກນິກສະໂມສອນ (Club Technical Director)
10. ເຈົ້າໜ້າທີ່ບໍລິຫານສະໂມສອນ (Team Staffs): ຜູ້ດູແລະອຸປະກອນ (kit-man)

**LOC (Local Organizing Committee):** ໝາຍເຖິງຝ່າຍຈັດການແຂ່ງຂັນຂອງສະໂມສອນທີ່ເປັນເຈົ້າບ້ານປະກອບມີຕຳແໜ່ງຕ່າງໆດັ່ງລຸ່ມນີ້:

1. ຜູ້ຈັດການສະໜາມ (Stadium Manager)
2. ຜູ້ປະສານງານການແຂ່ງຂັນປະຈຳສະໜາມ (General Coordinator)
3. ຜູ້ປະສານງານວຽກປ້ອງກັນປະຈຳສະໜາມ (Security Officer)
4. ຜູ້ປະສານງານວຽກສື່ມວນຊົນປະຈຳສະໜາມ (Media Officer)
5. ຜູ້ປະສານງານວຽກການຕະຫຼາດປະຈຳສະໜາມ (Marketing Officer)
6. ເຈົ້າໜ້າທີ່ແພດປະຈຳສະໜາມ (Medical Officer)\\

**ຜູ້ຕາງໜ້າທາງກົດໝາຍຂອງນັກກິລາ (Player Intermediary):** ຜູ້ຕາງໜ້າທາງກົດໝາຍຂອງນັກກິລາ ຫຼື Player Intermediary ແມ່ນບຸກຄົນທີ່ໄດ້ຮັບສິດໃນການດຳເນີນການຕາງໜ້າໃນວຽກງານຕ່າງໆຂອງ ນັກກິລາທີ່ຕົນເປັນ ຜູ້ຕາງໜ້າ



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

ໃຫ້, ແຕ່ຜູ້ຕາງໜ້າທາງກົດໝາຍຂອງນັກກິລາ ຈະຕ້ອງໄດ້ລົງທະບຽນກັບ ສຕລ ໃຫ້ສຳເລັດເສຍກ່ອນຈຶ່ງ ສາມາດດຳເນີນການຕາງໜ້າໃຫ້ນັກກິລາທີ່ແຂ່ງຂັນຢູ່ ໃນ ສປປ ລາວໄດ້.

**CL (Club Licensing):** ໃບອະນຸຍາດສະໂມສອນ, ແມ່ນໃບອະນຸຍາດທີ່ອອກໂດຍສະຫະພັນບານເຕະແຫ່ງຊາດລາວ ໃຫ້ກັບສະໂມສອນທີ່ສາມາດບັນລຸເງື່ອນໄຂຂອງການເຂົ້າ ຮ່ວມການແຂ່ງຂັນທີ່ ສຕລ ວາງອອກ ເຊິ່ງເອີ້ນວ່າ ໃບອະນຸຍາດສະໂມສອນລະດັບຊາດ.

**International Transfer Certificate (ITC):** ໃບອະນຸຍາດການໂອນຍ້າຍນັກກິລາລະຫວ່າງປະເທດເຊິ່ງມີສອງປະເພດຄື ITC ຂອງນັກກິລາອາຊີບ ແລະ ITC ຂອງນັກກິລາສະໝັກຫຼິ້ນ.

**Transfer Matching System (TMS):** ລະບົບໂອນຍ້າຍນັກກິລາອາຊີບລະຫວ່າງປະເທດຂອງສະຫະພັນບານເຕະນາໆຊາດທີ່ຄຸ້ມຄອງ ແລະ ຈັດການໂດຍສະຫະພັນບານເຕະຂອງແຕ່ລະປະເທດ.

**FIFA Competition Management System (FIFA CMS):** ໝາຍເຖິງລະບົບການບໍລິຫານການຈັດການແຂ່ງຂັນ

**FIFA CONNECT:** ລະບົບການລົງທະບຽນຂອງສະຫະພັນບານເຕະນາໆຊາດ (FIFA) ທີ່ນຳໃຊ້ເຂົ້າໃນທຸກການແຂ່ງຂັນຂອງ ສຕລ ທີ່ຮັບຮອງໂດຍ ສະຫະພັນບານເຕະນາໆຊາດ (FIFA).

**AD Cards (Accreditation Cards):** ໝາຍເຖິງບັດທີ່ອອກໃຫ້ກັບບຸກຄົນທີ່ຜ່ານການລົງທະບຽນກັບຝ່າຍຈັດການແຂ່ງຂັນເພື່ອຢັ້ງຢືນເຖິງສິດໃນການເຂົ້າຮ່ວມແຂ່ງຂັນຂອງບັນດານັກກິລາ, ເຈົ້າໜ້າທີ່ສະໂມສອນ ແລະ ເຈົ້າໜ້າທີ່ຈັດການແຂ່ງຂັນ.

**ທີມ (Team):** ໝາຍເຖິງນັກກິລາ ແລະ ເຈົ້າໜ້າທີ່ຂອງສະໂມສອນສະມາຊິກທີ່ໄດ້ລົງທະບຽນໃນການແຂ່ງຂັນຂອງ ສຕລ.

**ສະໂມສອນເຈົ້າບ້ານ (Home Team):** ໝາຍເຖິງສະໂມສອນທີ່ຈັດການແຂ່ງຂັນນັດໃດໜຶ່ງໃນສະໜາມແຂ່ງຂັນຂອງຕົວເອງ.

**ສະໂມສອນມາຢາມ (Away Team):** ໝາຍເຖິງສະໂມສອນທີ່ເດີນທາງໄປແຂ່ງຂັນທີ່ສະໜາມແຂ່ງຂັນຂອງສະໂມສອນອື່ນ. **ໃບປົດປ່ອຍນັກກິລາ (Release Letter):** ໝາຍເຖິງໜັງສືຢັ້ງຢືນການສິ້ນສຸດພັນທະຂອງນັກກິລາກັບສະໂມສອນຕົ້ນສັງກັດ. ເປັນເອກະສານທີ່ສະໂມສອນອອກໃຫ້ນັກກິລາຫຼັງຈາກສິ້ນສຸດພັນທະສັນຍາຕໍ່ກັນ.

**ໃບຢັ້ງຢືນການບໍ່ຂຶ້ນກັບບຸກຄົນໃດຂອງນັກກິລາ (TPO ຫຼື Third Party Ownership):** ໝາຍເຖິງເອກະສານຢັ້ງຢືນການບໍ່ຂຶ້ນກັບບຸກຄົນໃດໜຶ່ງທີ່ບໍ່ແມ່ນສະໂມສອນຕົ້ນສັງກັດໃນດ້ານສິດທິການຕະຫຼາດ ແລະ ການເງິນ.

**ສະໜາມແຂ່ງຂັນ (Stadium):** ໝາຍເຖິງບໍລິເວນອ້ອມຮອບທາງດ້ານໃນ ແລະ ດ້ານນອກຂອງສະຖານທີ່ຈັດການແຂ່ງຂັນ**ເດີ່ນແຂ່ງຂັນ (Field of Play):** ໝາຍເຖິງບໍລິເວນອ້ອມຮອບເດີ່ນຫຍ້າທີ່ໃຊ້ສຳລັບການແຂ່ງຂັນໂດຍໃຫ້ກວມເອົາເຂດ ເຕັກນິກບໍລິເວນຂ້າງເດີ່ນແຂ່ງຂັນພ້ອມ.

**ສະໂມສອນສະມາຊິກ (Clubs):** ໝາຍເຖິງອົງກອນທີ່ມີສະຖານະນິຕິບຸກຄົນຕາມການຈົດທະບຽນໃນກົດໝາຍພາຍໃນທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ໄດ້ຮັບໃບອະນຸຍາດໃຫ້ເຂົ້າຮ່ວມການແຂ່ງຂັນຈາກ ສຕລ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານທ່າອ່ອນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

**ເຫດສຸດວິໄສ:** ເຫດການທີ່ມີສາເຫດມາຈາກໄພທຳມະຊາດທີ່ບໍ່ສາມາດຄາດເດົາໄດ້ເຊັ່ນ, ຟ້າຜ່າ, ໄຟໃໝ້, ພາຍຸລົມແຮງ, ນ້ຳຖ້ວມກະທັນຫັນ ແລະ ເຫດການອື່ນໆທີ່ບໍ່ສາມາດຄາດເດົາ ແລະ ຄວບຄຸມໄດ້.

**Head-to-Head:** ຜົນສະຫຼຸບຂອງຜົນການແຂ່ງຂັນລະຫວ່າງສະໂມສອນທີ່ພົບກັນ.



ສຳນັກງານໃຫ່ຍ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

# ພາກທີ II

# ໜ້າທີ່ ແລະ ຄວາມຮັບຜິດຊອບໃນການບໍລິຫານຈັດການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ

## ມາດຕາ 2: ສະຫະພັນບານເຕະແຫ່ງຊາດລາວ

ສະຫະພັນບານເຕະແຫ່ງຊາດລາວເປັນອົງການຈັດຕັ້ງທີ່ຄຸ້ມຄອງ, ບໍລິຫານ ແລະ ຖືສິດທີ່ກ່ຽວຂ້ອງໃນດ້ານຕ່າງໆ ຂອງການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ, ໂດຍມີຈຸດປະສົງເພື່ອພັດທະນາກິລາບານເຕະພາຍໃຫ້ປະເທດ ໃຫ້ມີການຂະຫຍາຍຕົວຢ່າງຍືນຍົງ ແລະ ກ້າວໄປສູ່ການແຂ່ງຂັນອາຊີບຢ່າງມີປະສິດທິຜົນ. ໂດຍ ສຕລ ມີໜ່ວຍງານຮັບຜິດຊອບຄືພະແນກຈັດການແຂ່ງຂັນຊຶ່ງມີໜ້າທີ່ໃນການຈັດຕັ້ງປະຕິບັດແຜນການຈັດການແຂ່ງຂັນຕ່າງໆຂອງການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ແລະ ການປະສານງານຮ່ວມກັບພະແນກຕ່າງໆຂອງ ສຕລ.

1. ພະແນກຈັດການແຂ່ງຂັນ ສຕລ ມີພາລະບົດບາດໜ້າທີ່:
   - 1.1 ຄຸ້ມຄອງ, ສ້າງແຜນ ແລະ ບໍລິຫານການຈັດການແຂ່ງຂັນ.
   - 1.2 ຮັບຜິດຊອບຂໍການອະນຸມັດແຜນຈັດການແຂ່ງຂັນຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ.
   - 1.3 ປະສານງານກັບສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນໃນວຽກງານບໍລິຫານການແຂ່ງຂັນບານເຕະ ເຍົາວະຊົນຮຸ່ນອາຍຸບໍ່ເກີນ 16 ປີ ໃຫ້ມີຄວາມເປັນເອກະພາບ ແລະ ເປັນໄປຕາມແຜນການ.
   - 1.4 ກວດສອບ ແລະ ຮັບຮອງບັນດາສະຖານທີ່ຈັດການແຂ່ງຂັນທີ່ສະເໜີມາໂດຍສະໂມສອນເຂົ້າຮ່ວມການແຂ່ງຂັນ.
   - 1.5 ຈັດຕັ້ງການຄັດເລືອກ ແລະ ແຕ່ງຕັ້ງເຈົ້າໜ້າທີ່ຈັດການແຂ່ງຂັນໄປປະຕິບັດໜ້າທີ່ໃນການແຂ່ງຂັນ.
   - 1.6 ລວບລວມ, ວິເຄາະ ແລະ ປະເມີນຜົນການແຂ່ງຂັນໃນແຕ່ລະໄລຍະແລ້ວລາຍງານຕໍ່ອະນຸກຳມະການຈັດການແຂ່ງຂັນປະຈຳ ສຕລ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງກັບການແຂ່ງຂັນ.
   - 1.7 ລວບລວມ, ຄົ້ນຄວ້າ ແລະ ລາຍງານຕໍ່ອະນຸກຳມະການວິໄນຂອງ ສຕລ ໃນກໍລະນີມີການກະທຳຜິດກົດລະບຽບການແຂ່ງຂັນຂອງພາກສ່ວນໃດໜຶ່ງໃນການແຂ່ງຂັນ.
   - 1.8 ປະຕິບັດໜ້າທີ່ອື່ນໆທີ່ໄດ້ຮັບມອບໝາຍຈາກອະນຸກຳມະການຈັດການແຂ່ງຂັນປະຈຳ ສຕລ.

## ມາດຕາ 3: ລະບົບຕຸລາການຂອງ ສຕລ

ລະບົບຕຸລາການຂອງ ສຕລ ປະກອບດ້ວຍ 2 ອະນຸກຳມະການທີ່ຖືກແຕ່ງຕັ້ງຈາກ ສຕລ ຄື:

1/ ອະນຸກຳມະການວິໄນ, 2/ ອະນຸກຳມະການອຸທອນ; ຊຶ່ງປະຕິບັດໜ້າທີ່ຕາມພາລະບົດບາດດັ່ງລຸ່ມນີ້:

1. ອະນຸກຳມະການວິໄນ (Disciplinary Committee) ມີສິດ ແລະ ໜ້າທີ່:
   - 1.1 ພິຈາລະນາການປະທ້ວງຂອງສະໂມສອນໃນການແຂ່ງຂັນ ແລະ ໃສ່ວິໄນຕໍ່ການກະທຳຜິດຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບການແຂ່ງຂັນຕາມການປະທ້ວງ.
   - 1.2 ພິຈາລະນາການລົງວິໄນເຈົ້າໜ້າທີ່ຈັດການແຂ່ງຂັນ, ເຈົ້າໜ້າທີ່ສະໂມສອນ, ນັກກິລາ ແລະ ຜູ້ຊົມທີ່ກະທຳຜິດກົດລະບຽບການແຂ່ງຂັນຕາມການລາຍງານຂອງພະແນກຈັດການແຂ່ງຂັນ.
   - 1.3 ພິຈາລະນາເພີ່ມໂທດ, ຫຼຸດໂທດ ຫຼື ຍົກເລີກໂທດໂດຍບໍ່ກ່ຽວຂ້ອງກັບຜົນການແຂ່ງຂັນ. ຍົກເວັ້ນກໍລະນີຖືກປັບເສຍຕາມກົດລະບຽບການແຂ່ງຂັນຈະບໍ່ສາມາດພິຈາລະນາປ່ຽນແປງໄດ້, ໃນກໍລະນີຖືກປັບເສຍອະນຸກຳມະການຈະສາມາດພິຈາລະນາການຫຼຸດໂທດ ຫຼື ຍົກເລີກໂທດຂອງບັດເຫຼືອງບັດແດງເທົ່ານັ້ນ.
   - 1.4 ປະຕິບັດໜ້າທີ່ອື່ນໆຕາມທີ່ໄດ້ຮັບມອບໝາຍຈາກ ສຕລ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

2. ອະນຸກຳມະການອຸທອນ (Appeal Committee) ມີສິດ ແລະ ໜ້າທີ່:
   - **2.1** ພິຈາລະນາການອຸທອນຈາກສະໂມສອນ, ເຈົ້າໜ້າທີ່ຈັດການແຂ່ງຂັນ, ເຈົ້າໜ້າທີ່ສະໂມສອນ ແລະ ນັກກິລາ ໃນການແຂ່ງຂັນທີ່ບໍ່ເຫັນດີກັບຄຳຕັດສິນຂອງອະນຸກຳມະການວິໄນ.
   - **2.2** ພິຈາລະນາເພີ່ມໂທດ, ຫຼຸດໂທດ ຫຼື ຍົກເລີກໂທດບັດເຫຼືອງບັດແດງໂດຍບໍ່ກ່ຽວຂ້ອງກັບຜົນການແຂ່ງຂັນ.
   - **2.3** ປະຕິບັດໜ້າທີ່ອື່ນໆຕາມທີ່ໄດ້ຮັບມອບໝາຍຈາກ ສຕລ.

**ມາດຕາ 4: ອະນຸກຳມະການອື່ນໆ**

ສຕລ ໄດ້ມີການແຕ່ງຕັ້ງອະນຸກຳມະການອື່ນໆເພື່ອຈັດຕັ້ງປະຕິບັດວຽກງານທີ່ກ່ຽວຂ້ອງກັບການຈັດການແຂ່ງຂັນເຊັ່ນ: ອະນຸກຳມະການຕັດສິນ, ອະນຸກຳມະການເຕັກນິກວິທະຍາ ແລະ ອະນຸກຳມະການການຕະຫຼາດ ແລະ ສື່ມວນຊົນ, ອະນຸກຳມະການການແພດ, ອະນຸກຳມະການການເງິນ ແລະ ອະນຸກຳມະການອື່ນໆ. ບັນດາອະນຸກຳມະການທີ່ແຕ່ງຕັ້ງໂດຍ ສຕລ ຈະປະຕິບັດພາລະບົດບາດຕາມການມອບໝາຍວຽກຂອງຄະນະບໍລິຫານງານ ສຕລ ແລະ ກົດລະບຽບທີ່ກ່ຽວຂ້ອງ.

**ມາດຕາ 5: ສະໂມສອນບານເຕະທີ່ເຂົ້າຮ່ວມການແຂ່ງຂັນ**

ສະໂມສອນບານເຕະທີ່ຈະເຂົ້າຮ່ວມການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ຕ້ອງປະຕິບັດຕາມເງື່ອນໄຂດັ່ງລຸ່ມນີ້:

1. ສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນບານເຕະ ລາວລີກ 1 ປີ 2024-2025 ຈະໄດ້ຮັບບຸລິມະສິດການເຂົ້າຮ່ວມ.
2. ສະໂມສອນຕ້ອງເຄົາລົບ ແລະ ປະຕິບັດຕາມລະບຽບການບໍລິຫານຈັດການແຂ່ງຂັນ, ລະບຽບທີ່ກ່ຽວຂ້ອງກັບການແຂ່ງຂັນ ແລະ ມະຕິຕົກລົງຕ່າງໆຂອງອະນຸກຳມະການຈັດການແຂ່ງຂັນ ສຕລ.
3. ຄ່າໃຊ້ຈ່າຍໃນການບໍລິຫານການແຂ່ງຂັນ, ສະໂມສອນຕ້ອງຮັບຜິດຊອບເອງ.
4. ສະໂມສອນຕ້ອງຮັບຜິດຊອບ ແລະ ປະຕິບັດວຽກງານອື່ນໆທີ່ກ່ຽວຂ້ອງກັບການແຂ່ງຂັນຕາມທີ່ກຳນົດໄວ້ໃນຄູ່ມືຈັດການແຂ່ງຂັນຂອງ ສຕລ.
5. ສະໂມສອນໃດທີ່ຖືກກວດພົບວ່າມີຄວາມຜິດໃນການບໍ່ປະຕິບັດພັນທະສັນຍາກັບພະນັກງານ ຫຼື ນັກກິລາຂອງສະໂມສອນຕົວເອງ, ສະໂມສອນຈະຖືກປະຕິບັດວິໄນຕາມການຕັດສິນຂອງ ອະນຸກຳມະການວິໄນຂອງ ສຕລ ໂດຍອີງໃສ່ກົດລະບຽບ ແລະ ແນວທາງປະຕິບັດຢູ່ພາຍໃນ ແລະ ສາກົນ.
6. ສະໂມສອນຕ້ອງປ່ອຍໂຕນັກກິລາໃຫ້ກັບທີມຊາດຕາມການແຈ້ງການຂອງ ສຕລ, ຖ້າຫາກສະໂມສອນບໍ່ປະຕິບັດຕາມຈະຖືກພິຈາລະນາລົງວິໄນໂດຍອະນຸກຳມະການວິໄນຂອງ ສຕລ.

**ມາດຕາ 6: ການບໍລິຫານສິດທິປະໂຫຍດຂອງການແຂ່ງຂັນ**

ສຕລ ເປັນຜູ້ຖືສິດ ແລະ ຜົນປະໂຫຍດໃນການດຳເນີນການດ້ານການຕະຫຼາດ, ການຖ່າຍທອດສົດ ແລະ ຈັດຫາການສະໜັບສະໜູນການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ແຕ່ພຽງຜູ້ດຽວໂດຍມີລາຍລະອຽດດັ່ງລຸ່ມນີ້:

1. ສຕລ ຖືສິດພຽງຜູ້ດຽວໃນການຖ່າຍທອດສົດການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ, ໃນກໍລະນີສະໂມສອນ ຫຼື ອົງກອນໃດໜຶ່ງທີ່ຕ້ອງການຖ່າຍທອດສົດການແຂ່ງຂັນ ແລະ ຜົນປະໂຫຍດທີ່ເກີດຈາກການຖ່າຍທອດສົດຕ້ອງໄດ້ຮັບການຍິນຍອມ ແລະ ອະນຸຍາດຈາກ ສຕລ ກ່ອນຈຶ່ງສາມາດດຳເນີນການໄດ້.
2. ສຕລ ຖືສິດໃນການຈັດຫາຜູ້ສະໜັບສະໜູນການການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ພຽງຜູ້ດຽວ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

3. ສຕລ ຖືສິດການຕິດຕັ້ງປ້າຍໂຄສະນາຂ້າງສະໜາມຕາມຈຳນວນ ແລະ ຮູບແບບທີ່ອະນຸກຳມະການຈັດການແຂ່ງຂັນກຳນົດອອກ.ຜົນປະໂຫຍດທີ່ເກີດຈາກການຕິດຕັ້ງປ້າຍໂຄສະນາຂ້າງສະໜາມທີ່ອະນຸກຳມະການຈັດການແຂ່ງຂັນກຳນົດອອກແມ່ນເປັນຂອງ ສຕລ.
4. ສະໂມສອນຕ້ອງອະນຸຍາດໃຫ້ ສຕລ ນຳໃຊ້ເຄື່ອງໝາຍສະໂມສອນ, ຮູບພາບ, ນັກກິລາ ແລະ ສະຖານທີ່ຂອງສະໂມສອນໃນການດຳເນີນການຕະຫຼາດ, ໂຄສະນາສົ່ງເສີມການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ.
5. ສະໂມສອນຕ້ອງໃຫ້ຄວາມຮ່ວມມືໃນການເຂົ້າຮ່ວມການຖະແຫຼງຂ່າວກ່ອນ ແລະ ຫຼັງການແຂ່ງຂັນທຸກໆຄັ້ງຕາມການແຈ້ງຂອງຝ່າຍຈັດການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ.
6. ສະໂມສອນຕ້ອງອຳນວຍຄວາມສະດວກໃຫ້ນັກກິລາຂອງຕົວເອງໃນການໃຫ້ສຳພາດສັ້ນ (Flash Interview) ຫຼັງການແຂ່ງຂັນຕາມການແຈ້ງຂອງຝ່າຍຈັດການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ.

### ມາດຕາ 7: ສັນຍາວ່າຈ້າງ

1. ສັນຍາວ່າຈ້າງລະຫວ່າງສະໂມສອນ ແລະ ນັກກິລາ
   - **1.1** ນັກກິລາບານເຕະທີ່ລົງທະບຽນເຂົ້າແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ທີ່ມີອາຍຸບໍ່ຮອດ 18 ປີ ຕ້ອງໃຫ້ຜູ້ປົກຄອງເປັນຄົນເຊັນສັນຍາ ແລະ ສະແດງເອກະສານອື່ນໆສະບັບສຳເນົາທີ່ຖືກ ຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ.
   - **1.2** ໄລຍະເວລາສັນຍາຂອງນັກກິລາແຕ່ລະສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ຕ້ອງມີໄລຍະເວລາຕໍ່າສຸດ 1 ລະດູການຂອງການແຂ່ງຂັນ ແລະ ຕ້ອງແຈ້ງຈຳນວນຄ່າແຮງງານຂອງນັກກິລາໃສ່ໃນສັນຍາຢ່າງຈະແຈ້ງ.
   - **1.3** ນັກກິລາຄົນໃດທີ່ປອມແປງເອກະສານ ແລະ ໃຫ້ຂໍ້ມູນຜິດໃນການເຮັດສັນຍາ, ຖ້າຫາກ ສຕລ ກວດພົບສະໂມສອນທີ່ເຊັນສັນຍາ ແລະ ນັກກິລາຈະຖືກລົງໂທດຕາມລະບຽບຂອງການໂອນຍ້າຍນັກກິລາຂອງ ຟີຟາ ແລະ ການພິຈາລະນາຂອງ ຄະນະກຳມະການລະບຽບວິໄນ ຂອງສຕລ.
   - **1.4** ໃນກໍລະນີທີ່ ສຕລ ໄດ້ຮັບແຈ້ງວ່ານັກກິລາຍັງມີພັນທະຜູກພັນ ຫຼື ເປັນນັກກິລາທີ່ຍັງບໍ່ໝົດສັນຍາກັບສະໂມສອນເກົ່າ, ນັກກິລາຄົນດັ່ງກ່າວຈະຖືກຍຸດຕິແຂ່ງຂັນ ແລະ ດຳເນີນການກວດສອບຖ້າມີຄວາມຜິດຈະຖືກລົງໂທດຖອນອອກຈາກການແຂ່ງຂັນທັນທີ.
   - **1.5** ສາມາດອີງຕາມຮ່າງສັນຍາໃນພາກເອກະສານຊ້ອນທ້າຍ 2 ໃນການເຮັດສັນຍາກັບພະນັກງານສະໂມສອນ ແລະ ນັກກິລາ.
2. ຂໍ້ກຳນົດແນວທາງໃນການຕໍ່ສັນຍາ ແລະ ການເຈລະຈາສັນຍາວ່າຈ້າງສະບັບໃໝ່
   - **2.1** ໃນກໍລະນີທີ່ນັກກິລາມີສັນຍາກັບສະໂມສອນໃດໜຶ່ງແລ້ວ ແລະ ສັນຍາຍັງບໍ່ໝົດ, ຫ້າມນັກກິລາ ຫຼື ນາຍໜ້າຂອງນັກກິລາດຳເນີນການເຈລະຈາກັບສະໂມສອນອື່ນໂດຍເດັດຂາດຍົກເວັ້ນແຕ່ກໍລະນີມີການກຳນົດເງື່ອນໄຂໄວ້ໃນສັນຍາ.
   - **2.2** ໃນລັກສະນະດຽວກັນຫ້າມສະໂມສອນ ຫຼື ຕົວແທນຂອງສະໂມສອນດຳເນີນການເຈລະຈາກັບນັກກິລາທີ່ມີສັນຍາວ່າຈ້າງຢູ່ກັບສະໂມສອນອື່ນແລ້ວ ແລະ ຍັງບໍ່ໝົດສັນຍາເພື່ອຊັກຊວນມາຢູ່ກັບສະໂມສອນຂອງຕົວເອງ ຍົກເວັ້ນກໍລະນີທີ່ໄດ້ຮັບການຍິນຍອມຈາກສະໂມສອນຕົ້ນສັງກັດຂອງນັກກິລາດັ່ງກ່າວຢ່າງເປັນລາຍລັກອັກສອນແລ້ວຈຶ່ງສາມາດດຳເນີນການໄດ້. ຖ້າຫາກຜູ້ໃດຝ່າຝືນຂໍ້ກຳນົດດັ່ງກ່າວນີ້ຈະຖືກລົງໂທດ ຕາມກົດລະບຽບທີ່ກ່ຽວຂ້ອງ ແລະ ການພິຈາລະນາຂອງ ຄະນະກຳມະການລະບຽບວິໄນຂອງ ສຕລ ຕາມ ຄວາມເໝາະສົມ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ອຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

2.3 ການເຈລະຈາລະຫວ່າງສະໂມສອນບານເຕະກັບນາຍໜ້າຂອງນັກກິລາ ຫຼື ນັກກິລາທີ່ມີສັນຍາຢູ່ກັບສະໂມສອນອື່ນແລ້ວຈະສາມາດດຳເນີນໄດ້ໃນກໍລະນີດັ່ງຕໍ່ໄປນີ້:

1) ສັນຍາວ່າຈ້າງຂອງນັກກິລາດັ່ງກ່າວກັບສະໂມສອນຕົ້ນສັງກັດເຫຼືອໄລຍະເວລາໜ້ອຍກວ່າ 3 ເດືອນເຖິງຢ່າງໃດກໍ່ຕາມສະໂມສອນທີ່ຕ້ອງການເຈລະຈາຈະຕ້ອງເຮັດໜັງສືແຈ້ງສະໂມສອນຕົ້ນສັງກັດວ່າຕ້ອງ ການເຈລະຈາຕາມລະບຽບສະບັບນີ້. ຖ້າຫາກສະໂມສອນຕົ້ນສັງກັດຂອງນັກກິລາບໍ່ໄດ້ຮັບການສະເໜີ ຂໍເຈລະຈາເປັນລາຍລັກອັກສອນສະໂມສອນຕົ້ນສັງກັດມີສິດໃນການຟ້ອງຮ້ອງສະໂມສອນທີ່ມາເຈລະຈາກັບນັກກິລາຂອງຕົນມາຍັງຄະນະກຳມະການລະບຽບວິໄນຂອງ ສຕລ ໄດ້.

2) ໃນກໍລະນີທີ່ສະໂມສອນ ແລະ ນັກກິລາມີພັນທະສັນຍາຜູກພັນກັນຢູ່ ແລະ ບໍ່ໄດ້ດຳເນີນການຢ່າງໃດຢ່າງໜຶ່ງຕາມຂໍ້ກຳນົດຂ້າງເທິງກ່ອນສັນຍາຈະສິ້ນສຸດ 3 ເດືອນໃຫ້ຖືວ່ານັກກິລາສາມາດເຈລະຈາກັບສະໂມສອນອື່ນໄດ້.

3. ໃນກໍລະນີທີ່ນັກກິລາ ຫຼື ພະນັກງານຂອງສະໂມສອນໃດໜຶ່ງຮ້ອງຮຽນຫາ ສຕລ ວ່າຖືກສະໂມສອນຕົ້ນສັງກັດບໍ່ປະຕິບັດສັນຍາວ່າຈ້າງຢ່າງເປັນທຳ ຫຼື ສະໂມສອນຮ້ອງຮຽນມາຍັງ ສຕລ ວ່າ ນັກກິລາ ຫຼື ນາຍໜ້າຂອງນັກກິລາ ບໍ່ປະຕິບັດຕາມຂໍ້ກຳນົດຕາມສັນຍາວ່າຈ້າງ ແລະ ເມື່ອ ສຕລ ກວດສອບແລ້ວພົບ ວ່າມີຄວາມຜິດຈິງ ນັກກິລາ, ນາຍໜ້າ ແລະ ສະໂມສອນທີ່ກະທຳຜິດຈະຖືກລົງໂທດຕາມການພິຈາລະນາ ຂອງຄະນະກຳມະການລະບຽບວິໄນ ສຕລ.

4. ຂໍ້ກຳນົດ ແລະ ຂັ້ນຕອນຂອງການດຳເນີນການຍື່ນຄຳຮ້ອງກໍລະນີບໍ່ປະຕິບັດພັນທະສັນຍາວ່າຈ້າງ

4.1 ຜູ້ຍື່ນຄຳຮ້ອງຕ້ອງມີທະບຽນໃນການແຂ່ງຂັນ ແລະ ມີສັນຍາວ່າຈ້າງກັບຜູ້ລະເມີດພັນທະສັນຍາວ່າຈ້າງ.

4.2 ການຍື່ນຄຳຮ້ອງຕ້ອງຍື່ນພາຍໃນ 3 ເດືອນນັບຈາກມື້ທີ່ຖືກລະເມີດພັນທະສັນຍາວ່າຈ້າງ ໂດຍຕ້ອງຄັດຕິດ ບັນດາຫຼັກຖານ ແລະ ເອກະສານທີ່ກ່ຽວຂ້ອງມາພ້ອມ.

4.3 ເມື່ອ ສຕລ ໄດ້ຮັບຄຳຮ້ອງແລ້ວຈະແຈ້ງໃຫ້ຝ່າຍຖືກຮ້ອງຊາບ ແລະ ຊີ້ແຈງການຮ້ອງຟ້ອງດັ່ງກ່າວຕາມກຳ ນົດເວລາທີ່ ສຕລ ກຳນົດໃຫ້. ຫຼັງຈາກນັ້ນຈຶ່ງຈັດໃຫ້ມີການໄກ່ເກ່ຍລະຫວ່າງຜູ້ຍື່ນຄຳຮ້ອງ ແລະ ຜູ້ຖືກ ຮ້ອງ.

4.4 ໃນກໍລະນີບໍ່ສາມາດໄກ່ເກ່ຍກັນໄດ້ແມ່ນໃຫ້ຍື່ນຕໍ່ອະນຸກຳມະການລະບຽບວິໄນຂອງ ສຕລ ເປັນຜູ້ຕັດສິນ ແລະ ຝ່າຍທີ່ຖືກຕັດສິນວ່າມີຄວາມຜິດແມ່ນຈະຖືກປະຕິບັດວິໄນຕາມລະບຽບທີ່ກ່ຽວຂ້ອງ.

4.5 ໃນໄລຍະທີ່ສະໂມສອນຖືກພິຈາລະນາຄວາມຜິດ ສຕລ ມີອຳນາດງົດຈ່າຍເງິນອຸດໜູນສະໂມສອນໄວ້ ກ່ອນຈົນກວ່າຈະມີຂໍ້ສະຫຼຸບທີ່ຊັດເຈນຈາກພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 8: ການພັດທະນານັກກິລາ**

1. ສະໂມສອນບານເຕະທີ່ເຂົ້າຮ່ວມການແຂ່ງຂັນບານເຕະລາວລີກ 1 ໄດ້ຮັບສິດສົ່ງນັກກິລາເຢົາວະຊົນຮຸ່ນອາຍຸບໍ່ເກີນ 19 ປີຂອງຕົວເອງເຂົ້າໃນການແຂ່ງຂັນບານເຕະເຢົາວະຊົນຂອງ ສຕລ ຕາມລາຍການຈັດການແຂ່ງຂັນໃນແຕ່ລະປີຂອງ ສຕລ ໂດຍນັກກິລາ ເຢົາວະຊົນຕ້ອງຂຶ້ນທະບຽນ ໃນລະບົບການລົງທະບຽນຂອງ ສຕລ.
2. ສະໂມສອນບານເຕະທີ່ມີນັກກິລາລຸ້ນເຢົາວະຊົນເຂົ້າຮ່ວມການແຂ່ງຂັນຂອງ ສຕລ ຈະໄດ້ຮັບການອຸດໜູນເພີ່ມເຕີມຈາກ ສຕລ ຕາມແຜນຈັດການແຂ່ງຂັນເຢົາວະຊົນຂອງ ສຕລ.
3. ສະໂມສອນບານເຕະຕ້ອງເຂົ້າຮ່ວມ ແລະ ປະຕິບັດຕາມນະໂຍບາຍການພັດທະນານັກເຕະເຢົາວະຊົນຂອງ ສຕລ ແລະ ກິດຈະກຳພັດທະນາບານເຕະຮ່ວມມືກັບສາກົນທີ່ຈັດຂຶ້ນໂດຍ ສຕລ.
4. ສະໂມສອນມີພັນທະໃນການປະຕິບັດ, ດູແລຮັກສາສິດ ແລະ ຜົນປະໂຫຍດ ຂອງນັກກິລາຂອງສະໂຫສອນຕົນຕາມສັນຍາ ແລະ ກົດລະບຽບຂອງການແຂ່ງຂັນທີ່ກຳນົດອອກ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

## ພາກທີ III

## ຂໍ້ກໍານົດການເຂົ້າຮ່ວມການແຂ່ງຂັນ, ການຖອນອອກຈາກການແຂ່ງຂັນ, ການຢຸດຕິເຂົ້າຮ່ວມການແຂ່ງຂັນ, ຕາຕະລາງແຂ່ງຂັນ ແລະ ຮູບແບບການແຂ່ງຂັນ

### ມາດຕາ 9: ຂໍ້ກໍານົດການເຂົ້າຮ່ວມການແຂ່ງຂັນ

1. ສະໂມສອນບານເຕະທີ່ຕ້ອງການເຂົ້າຮ່ວມການແຂ່ງຂັນຕ້ອງສົ່ງໃບຕອບຕົກລົງເຂົ້າຮ່ວມການແຂ່ງຂັນຕາມທີ່ຝ່າຍຈັດການແຂ່ງຂັນກໍານົດ.
2. ປະກອບຂໍ້ມູນກ່ຽວກັບສະໂມສອນໃສ່ຮ່າງເອກະສານທີ່ຝ່າຍຈັດການແຂ່ງຂັນກໍານົດໃຫ້ ແລະ ສົ່ງໃຫ້ຝ່າຍຈັດການແຂ່ງຂັນຕາມກໍານົດເວລາ.
3. ສະໂມສອນບານເຕະທີ່ຈະເຂົ້າຮ່ວມການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ຈະແມ່ນສະໂມສອນບານເຕະລຸ້ນເຍົາວະຊົນຂອງສະໂມສອນບານເຕະທີ່ແຂ່ງຂັນຢູ່ໃນການແຂ່ງຂັນບານເຕະ ລາວລີກ 1 ຫຼື ສະໂມສອນບານເຕະທີ່ໄດ້ຮັບການຕົກລົງເຫັນດີຈາກຄະນະບໍລິຫານງານ ສຕລ.
4. ໂຄງຮ່າງການຈັດຕັ້ງຂອງຄະນະບໍລິຫານສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນບານເຕະ ເຍົາວະຊົນ ຊິງຂັນ ສຕລ ຮຸ່ນອາຍຸບໍ່ເກີນ 16 ປີ ແມ່ນອີງໃສ່ໂຄງຮ່າງດຽວກັນກັບການແຂ່ງຂັນບານຕະ ລາວລີກ 1 ຕ້ອງມີເງື່ອນໄຂດັ່ງຕໍ່ໄປນີ້:
   - 4.1 ກົດລະບຽບພາຍໃນສະໂມສອນ
   - 4.2 ປະທານສະໂມສອນ (ຕ້ອງເປັນບຸກຄົນດຽວກັນໃນໃບຈົດທະບຽນວິສາຫະກິດຂອງສະໂມສອນ)
   - 4.3 ຄະນະກໍາມະການບໍລິຫານສະໂມສອນ
   - 4.4 ຜູ້ຈັດການສະໂມສອນ (ຕ້ອງລະບຸຕົວຕົນຢ່າງຈະແຈ້ງ ແລະ ສາມາດຕິດຕໍ່ປະສານງານໄດ້ໂດຍກົງກັບພາກສ່ວນຈັດການແຂ່ງຂັນ ໃນກໍລະນີມີການປ່ຽນປະທານ, ຄະນະບໍລິຫານ ຫຼື ຜູ້ຈັດການ ສະໂມສອນຕ້ອງໄດ້ເຮັດໜັງສືແຈ້ງຢ່າງເປັນທາງການ)
   - 4.5 ຄະນະຄູຝຶກ ທີ່ມີໃບຢັ້ງຢືນຢ່າງຖືກຕ້ອງຈາກ AFC ຫຼື ສະຫະພັນບານເຕະທະວີບອື່ນ
   - 4.6 ພະນັກງານການເງິນ
   - 4.7 ການຕະຫຼາດ
   - 4.8 ພະນັກງານບໍລິຫານ
   - 4.9 ສື່ມວນຊົນ
   - 4.10 ພະນັກງານທີ່ກ່ຽວຂ້ອງເຊັ່ນ: ແພດ.

### ມາດຕາ 10: ການຖອນອອກຈາກການແຂ່ງຂັນ ແລະ ການຢຸດຕິການເຂົ້າຮ່ວມແຂ່ງຂັນ

1. ການຖອນອອກຈາກການແຂ່ງຂັນ:
   - **1.1** ສະໂມສອນໃດທີ່ໄດ້ຕອບຕົກລົງເຂົ້າຮ່ວມການແຂ່ງຂັນແລ້ວ ແຕ່ມີຈຸດປະສົງຕ້ອງການຖອນຕົວເອງອອກຈາກການແຂ່ງຂັນ; ສະໂມສອນທີ່ຂໍຖອນຕົວເອງອອກຈາກການແຂ່ງຂັນນັ້ນຈະຖືກຍົກເລີກການອອກໃບອານຸຍາດ Club Licensing ແລະ ປັບໃໝເປັນເງິນຈໍານວນ 30,000,000 (ສາມສິບລ້ານ)ກີບ.
   - **1.2** ສະໂມສອນໃດທີ່ຕ້ອງການຖອນຕົວໃນໄລຍະແຂ່ງຂັນ ຫຼື ຖືກລົງໂທດໃຫ້ອອກຈາກການແຂ່ງຂັນໂດຍ ສຕລ ຈະໃໝເປັນຈໍານວນເງິນ 50,000,000 (ຫ້າສິບລ້ານກີບ) ແລະ ຍົກເລີກຜົນການແຂ່ງຂັນຂອງສະໂມສອນດັ່ງກ່າວທັງໝົດ.



ສໍານັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

1.3 ບຸກຄົນທີ່ເປັນຄະນະບໍລິຫານງານສະໂມສອນທີ່ຖອນຕົນອອກຈາກການແຂ່ງຂັນຫ້າມບໍ່ໃຫ້ເຂົ້າຮ່ວມທຸກກິດຈະກໍາເຄື່ອນໄຫວໃນທຸກຮູບການທີ່ມີສ່ວນພົວພັນກ່ຽວກັບການແຂ່ງຂັນບານເຕະຂອງ ສຕລ ເປັນເວລາ 1 ລະດູການແຂ່ງຂັນ.

2. ການຢຸດຕິການເຂົ້າຮ່ວມການແຂ່ງຂັນ

2.1 ສະໂມສອນທີ່ປະກາດຢຸດຕິການເຄື່ອນໄຫວເຂົ້າຮ່ວມການແຂ່ງຂັນຫຼັງຈາກສິ້ນສຸດລະດູການແຂ່ງຂັນຈະຖືກຍົກເລີກສິດໃນການເຂົ້າແຂ່ງຂັນລາຍການເຍົາວະຊົນຂອງ ສຕລ ໃນປີຖັດໄປຕາມລຸ້ນອາຍຸທີ່ສະໂມສອນແຈ້ງຢຸດຕິການເຂົ້າຮ່ວມແຂ່ງຂັນ.

3. ການແຈ້ງຖອນຕົນອອກຈາກການແຂ່ງຂັນ ຫຼື ຢຸດຕິການເຄື່ອນໄຫວເຂົ້າຮ່ວມການແຂ່ງຂັນຕ້ອງແຈ້ງເປັນລາຍລັກອັກສອນທີ່ໄດ້ຮັບການເຊັນຢັ້ງຢືນຈາກປະທານສະໂມສອນເທົ່ານັ້ນຈຶ່ງມີຜົນນໍາໃຊ້.

**ມາດຕາ 11: ຕາຕະລາງການແຂ່ງຂັນ**

1. ຝ່າຍຈັດການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ຈະຈັດຕາຕະລາງການແຂ່ງຂັນໂດຍອີງໃສ່ເງື່ອນໄຂໂຕຈິງເພື່ອອໍານວຍຄວາມສະດວກໃຫ້ກັບຜູ້ຊົມ ແລະ ສະໂມສອນໃນການດໍາເນີນການແຂ່ງຂັນ. ໃນກໍລະນີທີ່ມີການປ່ຽນແປງຕາຕະລາງ ການແຂ່ງຂັນເນື່ອງຈາກມີເຫດອັນຄວນ, ຝ່າຍຈັດການແຂ່ງຂັນຈະພິຈາລະນາຕາຕະລາງການແຂ່ງຂັນໃໝ່ທີ່ເໝາະສົມໂດຍຄໍານຶງເຖິງຜົນປະໂຫຍດຂອງການແຂ່ງຂັນເປັນຫຼັກ ແລະ ຈະປະກາດໃຫ້ສະໂມສອນຊາບ 72 ຊົ່ວໂມງກ່ອນການແຂ່ງຂັນ.
2. ການສ້າງຕາຕະລາງການແຂ່ງຂັນແມ່ນອີງໃສ່ຫຼັກການສາກົນໃນການດໍາເນີນການເພື່ອຮັບປະກັນຄວາມໂປ່ງໃສ, ຖືກຕ້ອງ ແລະ ຍຸດຕິທໍາກັບທຸກຝ່າຍໃນການແຂ່ງຂັນ.
3. ສະໂມສອນສາມາດສະເໜີຂໍເລື່ອນຕາຕະລາງການແຂ່ງຂັນຂອງສະໂມສອນຕົວເອງແຕ່ຕ້ອງໄດ້ແຈ້ງຢ່າງໜັງສືທາງການກ່ອນໜ້າ 72 ຊົ່ວໂມງກ່ອນໜ້າການແຂ່ງຂັນໂດຍມີເງື່ອນໄຂດັ່ງລຸ່ມນີ້:

3.1 ມີນັກກິລາຖືກຮຽກໂຕໄປຮັບໃຊ້ທີມຊາດຈໍານວນ 3 ຄົນຂຶ້ນໄປ.

3.2 ກໍລະນີສຸກເສີນ ຫຼື ເກີດເຫດສຸດວິໄສ ຕາມເຫດຜົນທີ່ມີຄວາມຈໍາເປັນຂອງສະໂມສອນ

**ມາດຕາ 12: ຮູບແບບການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ**

ການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ນໍາໃຊ້ຮູບແບບການແຂ່ງຂັນດັ່ງນີ້:

1. ຮອບທໍາອິດ:
   - ແບບພົບກັນໝົດ (Single Round Robin) ໂດຍແຂ່ງຂັນກັນ 1 ຮອບ ແລະ ສະໂມສອນທີ່ໄດ້ອັນດັບທີ 1-4 ເຂົ້າຮອບຕໍ່ໄປ, ແຂ່ງຂັນໃນເວລາ 90 ນາທີ, ພັກເຄິ່ງເວລາ 15 ນາທີ.
2. ຮອບ 4 ທີມ:
   - ເອົາອັນດັບ 1-4 ມາຈັບສະຫຼາກປະກົບຄູ່ແຂ່ງຂັນ. ແຂ່ງຂັນນັດດຽວ ຖ້າຈົບການແຂ່ງຂັນໃນເວລາປົກກະຕິ 90 ນາທີຜົນການແຂ່ງຂັນສະເໝີກັນ ແມ່ນຈະມີການຕໍ່ເວລາພິເສດ 30 ນາທີ ແບ່ງອອກເປັນ 2 ໄລຍະ, ໄລຍະລະ 15 ນາທີ ຖ້າຜົນການແຂ່ງຂັນຍັງສະເໝີກັນຢູ່ ແມ່ນໃຫ້ເຕະລູກໂທດຕັດສິນເພື່ອຫາທີມຊະນະຜ່ານເຂົ້າຮອບຊີງຊະນະເລີດ.



ສໍານັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

3. ຊີງອັນດັບທີ 3:
   - ທີມທີ່ເສຍໃນຮອບຮອງຊະນະເລີດຈະໄດ້ເປັນຄູ່ຊີງອັນດັບ 3 ໂດຍຈະແຂ່ງຂັນນັດດຽວ ຖ້າຈົບການແຂ່ງຂັນໃນເວລາປົກກະຕິ 90 ນາທີຜົນການແຂ່ງຂັນສະເໝີກັນ ຈະບໍ່ມີການຕໍ່ເວລາພິເສດ ແມ່ນໃຫ້ເຕະລູກໂທດຕັດສິນເພື່ອຫາທີມຊະນະໃນນັດດັ່ງກ່າວເລີຍ.
4. ນັດຊີງຊະນະເລີດ:
   - ທີມຊະນະໃນຮອບຮອງຊະນະເລີດຈະໄດ້ເປັນຄູ່ຊີງຊະນະເລີດ ແຂ່ງຂັນນັດດຽວ ຖ້າຈົບການແຂ່ງຂັນໃນເວລາປົກກະຕິ 90 ນາທີຜົນການແຂ່ງຂັນສະເໝີກັນ ແມ່ນຈະມີການຕໍ່ເວລາພິເສດ 30 ນາທີ ແບ່ງອອກເປັນ 2 ໄລຍະ, ໄລຍະລະ 15 ນາທີ ຖ້າຜົນການແຂ່ງຂັນຍັງສະເໝີກັນຢູ່ ແມ່ນໃຫ້ເຕະລູກໂທດຕັດສິນເພື່ອຫາທີມຊະນະເລີດ.

**ມາດຕາ 13: ການຄິດໄລ່ຄະແນນ**

- ຊະນະໄດ້ 3 ຄະແນນ
- ສະເໝີໄດ້ 1 ຄະແນນ
- ເສຍໄດ້ 0 ຄະແນນ

**ມາດຕາ 14: ການຈັດອັນດັບໃນຕາຕະລາງຄະແນນ**

1. ການຄິດໄລ່ຄະແນນການຈັດອັນດັບໃນໄລຍະດຳເນີນການແຂ່ງຂັນ
   - ຄະແນນລວມ (Points)
   - ນັດພົບກັນ (Head-to-Head)
   - ລູກສະເລ່ຍລວມ (Goal Difference)
   - ລູກໄດ້ລວມທີ່ຫຼາຍກວ່າ (Goal For)
   - ລູກເສຍລວມທີ່ໜ້ອຍກວ່າ (Goal Against)
2. ການຄິດໄລ່ຄະແນນການຈັດອັນດັບໃນສິ້ນສຸດລະດູການແຂ່ງຂັນ
   - ສະໂມສອນທີ່ໄດ້ຄະແນນລວມສູງສຸດຕາມລຳດັບ 1-4 ເມື່ອສິ້ນສຸດການແຂ່ງຂັນຮອບທຳອິດຈະໄດ້ເຂົ້າໄປແຂ່ງຂັນໃນຮອບ 4 ທີມ (ຮອບຮອງຊະນະເລີດ) ແລະ ຮອບຊີງຊະນະເລີດ ເຊິ່ງຈະສະຫຼຸບຕາມຜົນການແຂ່ງຂັນຂອງແຕ່ລະນັດແຂ່ງຂັນ.
3. ຖ້າໃນກໍລະນີທີ່ມີສະໂມສອນຄະແນນເທົ່າກັນເມື່ອສິ້ນສຸດການແຂ່ງຂັນພົບກັນໝົດໃນຮອບທຳອິດແມ່ນໃຫ້ໃຊ້ຫຼັກການດັ່ງລຸ່ມນີ້:
   - ຄະແນນລວມ (Points)
   - ນັດພົບກັນ (Head-to-Head), ການຄິດໄລ່ (Head-to-Head) ຈະຄິດໄລ່ສະເພາະຜົນການແຂ່ງຂັນລະຫວ່າງສະໂມສອນທີ່ພົບກັນ (ກໍລະນີທີມີຄະແນນເທົ່າກັນຂອງ 2 ສະໂມສອນ ຫຼື ຫຼາຍກວ່າ).
   - ລູກສະເລ່ຍລວມ (Goal Difference)
   - ລູກໄດ້ລວມທີ່ຫຼາຍກວ່າ (Goal For)
   - ລູກເສຍລວມທີ່ໜ້ອຍກວ່າ (Goal Against)
   - ນຳໃຊ້ຫຼັກການຄະແນນຄຸນສົມບັດຕາມລະບຽບຂອງສະຫະພັນບານເຕະນາໆຊາດ (FIFA) ໂດຍການນັບຈຳນວນບັດເຫຼືອງ ແລະ ບັດແດງທີ່ສະໂມສອນໄດ້ຮັບໃນການແຂ່ງຂັນ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

4. ຖ້າຫາກຄິດໄລ່ຕາມຫຼັກການຂ້າງເທິງໝົດແລ້ວຍັງຄົງສະເໝີກັນຢູ່ແມ່ນໃຫ້ຕັດສິນດ້ວຍການເຕະລູກໂທດ ທີ່ຈຸດໂທດ (ກໍລະນີມີ 2 ສະໂມສອນທີ່ມີຄະແນນເທົ່າກັນທີ່ກຳລັງແຂ່ງຂັນດ້ວຍກັນຢູ່)

5. ຖ້າຫາກມີສະໂມສອນທີ່ມີຄະແນນເທົ່າກັນເກີນກວ່າ 2 ສະໂມສອນລະຫວ່າງການແຂ່ງຂັນພົບກັນໝົດໃນຮອບທຳອິດ ແມ່ນຈະຕັດສິນດ້ວຍການຄິດໄລ່ຕາມຫຼັກການ 1-5 ຂ້າງເທິງຈາກນັດການແຂ່ງຂັນຂອງສະໂມສອນທີ່ມີຄະແນນສະເໝີກັນພົບກັນ **(Mini League).**

6. ຖ້າໃນກໍລະນີພິຈາລະນາຕາມຫຼັກການຂ້າງເທິງຕາມລຳດັບແລ້ວ ຫາກໄດ້ຂໍ້ສະຕັດສິນ ຂໍ້ໃດຂໍ້ໜຶ່ງແລ້ວ ແມ່ນໃຫ້ຢຸດຕິການພິຈາລະນາຂໍ້ຕໍ່ໄປ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

## ພາກທີ IV
## ກະຕິກາ ແລະ ລະບຽບທີ່ໃຊ້ຄວບຄຸມການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ

**ມາດຕາ 15: ກະຕິກາການແຂ່ງຂັນ**

1. ກະຕິກາການແຂ່ງຂັນທີ່ນຳໃຊ້ໃນການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ແມ່ນນຳໃຊ້ກະຕິກາຈາກ IFAB.
2. ກະຕິກາອື່ນໆທີ່ກ່ຽວຂ້ອງທີ່ໄດ້ຮັບການຮັບຮອງ ແລະ ປະກາດນຳໃຊ້ໂດຍ ສຕລ.

**ມາດຕາ 16: ຫຼັກການການຕັດສິນ**

1. ກຳມະການຕັດສິນໃນການແຂ່ງຂັນຈະໄດ້ຮັບການແຕ່ງຕັ້ງຈາກ ສຕລ ເທົ່ານັ້ນ, ສະໂມສອນບໍ່ສາມາດສະເໜີເລືອກກຳມະການຕັດສິນໄດ້.
2. ໃນກໍລະນີທີ່ມີເຫດການຜິດປົກກະຕິເກີດຂຶ້ນຢູ່ສະຖານທີ່ແຂ່ງຂັນເຊິ່ງອາດເກີດຈາກນັກກິລາ, ເຈົ້າໜ້າທີ່ສະໂມສອນ ຫຼື ແຟນບານ, ເຫດສຸດວິໄສ ທີ່ອາດສົ່ງຜົນເສຍຕໍ່ການແຂ່ງຂັນ. ກຳມະການຕັດສິນ ແລະ ຜູ້ຄວບຄຸມການແຂ່ງຂັນຈະຕັດສິນບັນຫາຮ່ວມກັນພ້ອມທັງເຮັດລາຍງານສະເໜີໃຫ້ອະນຸກຳມະການຈັດການແຂ່ງຂັນຮັບຊາບຢ່າງເປັນລາຍລັກອັກສອນ ພ້ອມດ້ວຍຫຼັກຖານເພື່ອສະເໜີຕໍ່ອະນຸກຳມະການວິໄນໃນຂັ້ນຕໍ່ໄປ.

**ມາດຕາ 17: ການປ່ຽນແປງຕາຕະລາງແຂ່ງຂັນ ແລະ ສະໜາມແຂ່ງຂັນໃນກໍລະນີເກີດເຫດສຸດວິໄສ**

1. ຫາກມີເຫດຈຳເປັນເລັ່ງດ່ວນ ແລະ ມີເຫດຜົນອັນຄວນ ຝ່າຍຈັດການແຂ່ງຂັນສາມາດພິຈາລະນາເລື່ອນ ວັນເວລາ ແລະ ສະຖານທີ່ແຂ່ງຂັນ ຫຼື ປ່ຽນແປງຄູ່ແຂ່ງຂັນໄດ້ຕາມຄວາມເໝາະສົມໂດຍຈະແຈ້ງໃຫ້ສະໂມສອນທີ່ກ່ຽວຂ້ອງຮັບຊາບຕາມເວລາອັນຄວນ.
2. ກໍລະນີທີ່ສະໂມສອນໃດໜຶ່ງບໍ່ສາມາດລົງແຂ່ງຂັນໄດ້ໃນມື້ແຂ່ງຂັນ ແລະ ສະໂມສອນຄູ່ແຂ່ງຂັນໄດ້ເດີນທາງໄປຮອດສະໜາມແຂ່ງຂັນແລ້ວ. ສະໂມສອນທີ່ບົກພ່ອງຕ້ອງຮັບຜິດຊອບຊົດໃຊ້ຄ່າເສຍຫາຍ ໃຫ້ກັບສະໂມສອນຄູ່ແຂ່ງຂັນ ແລະ ເຈົ້າໜ້າທີ່ຈັດການແຂ່ງຂັນຕາມການ ພິຈາລະນາຂອງອະນຸກຳມະການວິໄນຂອງ ສຕລ.
3. ໃນກໍລະນີເກີດເຫດສຸດວິໄສຂຶ້ນກ່ອນເລີ່ມການແຂ່ງຂັນໂດຍບໍ່ແມ່ນເກີດຈາກຝ່າຍໃດໜຶ່ງເຊັ່ນ: ລະບົບໄຟຟ້າໃນສະໜາມເສຍຫາຍຍ້ອນໄພທຳມະຊາດ, ຝົນຕົກໜັກ, ນ້ຳຖ້ວມ, ພາຍຸລົມແຮງ ແລະ ເຫດການອື່ນໆ. ໂດຍເຫດສຸດວິໄສດັ່ງກ່າວໄດ້ແກ່ຍາວກາຍເວລາການແຂ່ງຂັນໄປເກີນ 60 ນາທີແຕ່ຍັງບໍ່ຢຸດເຊົາ ແລະ ເຈົ້າໜ້າທີ່ ຈັດການແຂ່ງຂັນປະຈຳສະໜາມປະເມີນວ່າບໍ່ສາມາດຈັດການແຂ່ງຂັນໄດ້, ນັດດັ່ງກ່າວຈະຖືກເລື່ອນການແຂ່ງຂັນອອກໄປໃນມື້ໃໝ່ຕາມການພິຈາລະນາຂອງຝ່າຍຈັດການແຂ່ງຂັນ.
4. ໃນກໍລະນີເກີດເຫດສຸດວິໄສຂຶ້ນໃນໄລຍະການແຂ່ງຂັນເຊັ່ນ: ລະບົບໄຟຟ້າໃນສະໜາມເສຍຫາຍຍ້ອນໄພທຳມະຊາດ, ຝົນຕົກໜັກ, ນ້ຳຖ້ວມ, ພາຍຸລົມແຮງ, ການກໍ່ຈາລະຈົນຂອງແຟນບານ ແລະ ເຫດການອື່ນໆທີ່ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບບໍ່ສາມາດຄວບຄຸມໄດ້, ເຈົ້າໜ້າທີ່ຝ່າຍຈັດການແຂ່ງຂັນສາມາດປະເມີນສະຖານະການດ້ວຍການຢຸດຕິການແຂ່ງຂັນ ແລະ ລໍຖ້າໄດ້ເປັນເວລາ 30 ນາທີເພື່ອປະເມີນສະຖານະການອີກຄັ້ງໜຶ່ງ ແລະ ຖ້າຫາກລໍຖ້າຄົບ 30 ນາທີແລ້ວສະພາບການຍັງບໍ່ດີຂຶ້ນ, ເຈົ້າໜ້າທີ່ຝ່າຍຈັດການແຂ່ງຂັນສາມາດຂະຫຍາຍເວລາອອກໄປອີກ 30 ນາທີຖ້າຫາກສາມາດຮັບປະກັນວ່າຈະສາມາດແຂ່ງຂັນຄືນໄດ້ໂດຍຕ້ອງໄດ້ ຮັບການເຫັນດີຮ່ວມກັນທຸກຝ່າຍ. ຖ້າຫາກລໍຖ້າຄົບກຳນົດ



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

5. ເວລາ 60 ນາທີແລ້ວຍັງບໍ່ສາມາດຈັດການແຂ່ງຂັນຄືນໄດ້, ການແຂ່ງຂັນນັດດັ່ງກ່າວຈະຖືກເລື່ອນໄປແຂ່ງຂັນໃນມື້ໃໝ່ ໂດຍໃຫ້ຮັກສາເວລາການແຂ່ງຂັນທີ່ຍັງເຫຼືອນັ້ນ ແລະ ຜົນການແຂ່ງຂັນໄວ້ຄືເກົ່າ.
6. ເພື່ອຫຼີກລ້ຽງພາລະຄ່າໃຊ້ ຈ່າຍທີ່ຈະເກີດຂຶ້ນກັບສະໂມສອນ ແລະ ຝ່າຍຈັດການແຂ່ງຂັນໃນກໍລະນີຈັດການແຂ່ງຂັນຄືນ ຕາມເວລາແຂ່ງຂັນທີ່ເຫຼືອຢູ່, ໃນກໍລະນີເກີດເຫດສຸດວິໄສຂຶ້ນໃນໄລຍະການແຂ່ງຂັນເຊິ່ງການແຂ່ງຂັນນັ້ນດຳເນີນມາໄດ້
7. 85 ນາທີແລ້ວໂດຍຜົນການແຂ່ງຂັນເວລານັ້ນສະເໝີກັນຢູ່ ແລະ ບໍ່ແມ່ນການແຂ່ງຂັນທີ່ມີຜົນຕໍ່ການລຸ້ນແຊ້ມ ແລະ ໄດ້ ປະຕິບັດຕາມຂໍ້ **4** ຂອງ **ມາດຕາ 17** ແລ້ວແມ່ນໃຫ້ເປັນດຸນພິນິດຂອງເຈົ້າໜ້າທີ່ຈັດການແຂ່ງຂັນໂດຍອີງໃສ່ການ ຕົກລົງເຫັນດີຂອງຜູ້ຈັດການສະໂມສອນທັງສອງໃນການຕັດສິນໃຫ້ນັດແຂ່ງຂັນດັ່ງກ່າວສະເໝີກັນ ແລະ ຖືວ່າການ ແຂ່ງຂັນສິ້ນສຸດ.
8. ໃນກໍລະນີເກີດມີເຫດການວຸ້ນວາຍເກີດຂຶ້ນໃນສະໜາມ ໂດຍເປັນເຫດໃຫ້ຕ້ອງ ຢຸດຕິການແຂ່ງຂັນ ແລະ ບໍ່ສາມາດການ ແຂ່ງຂັນໄດ້ພາຍໃນ 45 ນາທີສະໂມສອນທີ່ເປັນຕົ້ນເຫດຈະຖືກລົງວິໄນດັ່ງນີ້:
    **6.1** ກໍລະນີສະໂມສອນປ່ອຍປະໃຫ້ບຸກຄະລາກອນ ຫຼື ນັກກິລາຂອງຕົນປະພຶດບໍ່ເໝາະສົມທີ່ເປັນສາເຫດໃຫ້ເກີດ ຄວາມວຸ້ນວາຍໃນສະໜາມແຂ່ງຂັນ ແລະ ບໍ່ສາມາດແຂ່ງຂັນຄືນໄດ້ພາຍໃນເວລາ 45 ນາທີສະໂມສອນທີ່ເປັນຕົ້ນ ເຫດຈະຖືກປັບເສຍ 0-3 ແຕ່ຖ້າຫາກສະໂມສອນມາຍາມຍິງໄດ້ຫຼາຍກວ່າ 3 ລູກກໍ່ໃຫ້ຮັກສາຈຳນວນປະຕູນັ້ນ ໄວ້. ສ່ວນການປັບໄໝເງິນແມ່ນຍົກເວັ້ນ.
    **6.2** ກໍລະນີເກີດເຫດວຸ້ນວາຍຈາກແຟນບານຈົນເຮັດໃຫ້ບໍ່ສາມາດກັບມາແຂ່ງຂັນໄດ້ໃນພາຍໃນ ເວລາ 45 ນາທີຝ່າຍ ທີ່ກໍ່ເຫດຈະຖືກປັບເສຍຕາມຂໍ້ **6.1** ຂອງ **ມາດຕາ 17** ພ້ອມທັງຖືກພິຈາລະນາລົງວິໄນຈາກອະນຸກຳມະການ ວິໄນຂອງ ສຕລ.

### ມາດຕາ 18: ສະຖານທີ່ຈັດການແຂ່ງຂັນ

1. ການແຂ່ງຂັນຈະຈັດຂຶ້ນຢູ່ສະໜາມກາງທີ່ຈັດໂດຍຄະນະກຳມະການຈັດການແຂ່ງຂັນ.
2. ຄະນະກຳມະການຈັດການແຂ່ງຂັນຈະເປັນຜູ້ຮັບຜິດຊອບກະກຽມສະໜາມໃຫ້ມີຄວາມພ້ອມທຸກດ້ານໃນມື້ແຂ່ງຂັນຕາມ ກົດລະບຽບການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ.
3. ເດີ່ນແຂ່ງຂັນບານເຕະຈະນຳໃຊ້ຂະໜາດຕາມມາດຕະຖານທີ່ກຳນົດໄວ້ໃນ Laws of The Game.
4. ເຈົ້າໜ້າທີ່ຈັດການແຂ່ງຂັນຈະເຮັດການກວດສອບສະໜາມແຂ່ງຂັນທຸກໆຄັ້ງກ່ອນເລີ່ມຕົ້ນການແຂ່ງຂັນ ເພື່ອຮັບປະກັນ ໃຫ້ການແຂ່ງຂັນເປັນໄປຢ່າງລາບລື່ນ ແລະ ມີປະສິດທິຜົນ.

### ມາດຕາ 19: ບ່ອນນັ່ງນັກກິລາສຳຮອງ ແລະ ເຂດເຕັກນິກ

1. ສະໜາມແຂ່ງຂັນຈະຈັດໃຫ້ມີບ່ອນນັ່ງນັກກິລາສຳຮອງຈຳນວນ 20 ບ່ອນເພື່ອໃຫ້ພຽງພໍກັບຈຳນວນນັກກິລາສຳຮອງ 12 ຄົນ ແລະ ເຈົ້າໜ້າທີ່ສະໂມສອນຈຳນວນ 8 ທ່ານ.
2. ນັກກິລາສຳຮອງຕ້ອງໃສ່ເສື້ອບິບ (Warm-Up Bib) ທີ່ມີສີແຕກຕ່າງຈາກນັກກິລາໃນເດີ່ນແຂ່ງຂັນ ແລະ ນັກກິລາຝ່າຍ ກົງກັນຂ້າມໃນເວລາຢູ່ໃນເຂດເຕັກນິກ ແລະ ອົບອຸ່ນຮ່າງກາຍ. ໃນກໍລະນີນີ້ໃຫ້ລວມທັງເຈົ້າໜ້າທີ່ສະໂມສອນທີ່ມີສີເສື້ອ ຄ້າຍຄືກັບນັກກິລາໃນເດີ່ນແຂ່ງຂັນ.
3. ນັກກິລາ ຫຼື ເຈົ້າໜ້າທີ່ສະໂມສອນທີ່ຖືກໄລ່ອອກຈາກເດີ່ນແຂ່ງຂັນບໍ່ສາມາດນັ່ງຢູ່ໃນເຂດເຕັກນິກໄດ້. ຕ້ອງຂຶ້ນໄປນັ່ງຢູ່ ອັດສະຈັນ ຫຼື ຫ້ອງປ່ຽນເຄື່ອງຂອງສະໂມສອນຕົວເອງເທົ່ານັ້ນ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

4. ເຈົ້າໜ້າທີ່ສະໂມສອນຕ້ອງແຕ່ງກາຍໃຫ້ສຸພາບ ແລະ ເໝາະສົມ (ຫ້າມໃສ່ເກີບແຕະ ແລະ ເສື້ອກ້າມ) ພ້ອມທັງໃສ່ບັດ AD Card ຂອງຕົວເອງໄວ້ຕະຫຼອດເວລາ.ຖ້າຫາກບໍ່ປະຕິບັດຕາມຈະຖືກລົງວິໄນຕາມລະບຽບການລົງວິໄນຂອງ ສຕລ.
5. ໃນໄລຍະການແຂ່ງຂັນຫ້າມນັກກິລາ ແລະ ເຈົ້າໜ້າທີ່ສະໂມສອນໃຊ້ເຄື່ອງມືສື່ສານໃນບໍລິເວນເຂດເຕັກນິກ ແລະ ອ້ອມຮອບເດີ່ນແຂ່ງຂັນຍົກເວັ້ນເຄື່ອງມືສື່ສານສະເພາະທີ່ນຳໃຊ້ສຳຫຼັບ ເຫດຜົນດ້ານເຕັກນິກ ຫຼື ເພື່ອປະຖົມພະຍາບານນັກກິລາບາດເຈັບ. ໃນກໍລະນີສະໂມສອນທີ່ຈະນຳໃຊ້ເຄື່ອງມືສື່ສານໃນເຂດເຕັກນິກຕ້ອງແຈ້ງເຈົ້າໜ້າທີ່ຈັດການແຂ່ງຂັນປະຈຳສະໜາມໃຫ້ຮັບຊາບ ແລະ ສາມາດນຳໃຊ້ໄດ້ພຽງແຕ່ຄົນດຽວ.
6. ຫົວໜ້າຄູຝຶກຕ້ອງຄວບຄຸມ ແລະ ກຳກັບດູແລພຶດຕິກຳຂອງເຈົ້າໜ້າທີ່ສະໂມສອນ ແລະ ນັກກິລາສຳຮອງໃນເຂດເຕັກນິກຂອງຕົວເອງ. ຖ້າຫາກມີການກະທຳຜິດເກີດຂຶ້ນໃນເຂດເຕັກນິກຂອງສະໂມສອນໃດໜຶ່ງ ແລະ ບໍ່ສາມາດລະບຸກະທຳຜິດໄດ້ຫົວໜ້າຄູຝຶກຕ້ອງເປັນຜູ້ຮັບຜິດຊອບຕໍ່ການກະທຳຜິດດັ່ງກ່າວ. ຖ້າຫາກບໍ່ມີຫົວໜ້າຄູຝຶກໃນນັດດັ່ງກ່າວຜູ້ຊ່ວຍຫົວໜ້າຄູຝຶກຕ້ອງເປັນຜູ້ຮັບຜິດຊອບແທນ.

**ມາດຕາ 20: ບານສຳລັບການແຂ່ງຂັນ/Match ball**

1. ສະໂມສອນຕ້ອງນຳໃຊ້ບານເຕະທີ່ເປັນໝາກບານແຂ່ງຂັນຂອງການແຂ່ງຂັນເທົ່ານັ້ນໃນການແຂ່ງຂັນ.
2. ໝາກບານນຳໃຊ້ສຳລັບການແຂ່ງຂັນໃນມື້ແຂ່ງຂັນຝ່າຍຈັດການແຂ່ງຂັນຈະເປັນຜູ້ຮັບຜິດຊອບກະກຽມ.
3. ໃນກໍລະນີທີ່ສະໂມສອນຕ້ອງການໝາກບານທີ່ຈະນຳໃຊ້ແຂ່ງຂັນເພີ່ມເພື່ອນຳໃຊ້ໃນການຝຶກຊ້ອມຂອງສະໂມສອນຕົວເອງສາມາດສະເໜີຂໍຊື້ຈາກ ສຕລ ໄດ້.

**ມາດຕາ 21: ຊຸດແຂ່ງຂັນ**

1. ສະໂມສອນທີ່ເຂົ້າຮ່ວມຕ້ອງໄດ້ແຈ້ງສີຂອງຊຸດແຂ່ງຂັນປະຈຳສະໂມສອນຈຳນວນ 2 ຊຸດຢ່າງຕໍ່າຕໍ່ໜຶ່ງລະ ດູການຕໍ່ຄະນະຈັດການແຂ່ງຂັນກ່ອນ 2 ອາທິດກ່ອນໜ້າການແຂ່ງຂັນລີກຈະເປີດ ຂຶ້ນຢ່າງເປັນທາງການ.
2. ເພື່ອຫຼີກລ້ຽງສີຄືກັນ, ສີຊຸດຂອງການແຂ່ງຂັນນັ້ນແມ່ນຕ້ອງອີງໃສ່ກົດລະບຽບ ແລະ ຕາຕະລາງການແຂ່ງຂັນສະໂມສອນທີ່ຂຶ້ນໜ້າ (ເປັນສະໂມສອນເຈົ້າບ້ານ) ມີສິດເລືອກສີແຂ່ງຂັນກ່ອນ ສ່ວນສະໂມສອນມາຢາມຕ້ອງໄດ້ເລືອກສີຊຸດແຂ່ງຂັນທີ່ແຕກຕ່າງຈາກສະໂມສອນເຈົ້າບ້ານ.
3. ທຸກໆສະໂມສອນຕ້ອງນຳເອົາເຄື່ອງນຸ່ງແຂ່ງຂັນ 2 ຊຸດ ໄປໃນມື້ມີການແຂ່ງຂັນເພື່ອປ້ອງກັນບໍ່ໃຫ້ຊຸດແຂ່ງຂັນຄ້າຍຄືກັນຖ້າຫາກຜູ້ຄວບຄຸມການແຂ່ງຂັນ ແລະ ກຳມະການຕັດສິນເຫັນວ່າສີຂອງທັງສອງສະໂມສອນຄ້າຍຄືກັນເຫັນວ່າມັນບໍ່ຖືກຕ້ອງຕາມກະຕິກາການແຂ່ງຂັນ ແລະ ເຮັດໃຫ້ມີຄວາມຫຍຸ້ງຍາກໃນ ການຕັດສິນ, ກຳມະການຕັດສິນມີສິດຮຽກຮ້ອງໃຫ້ສະໂມສອນໃດໜຶ່ງປ່ຽນສີຊຸດແຂ່ງຂັນທັນທີນັ້ນກໍ່ຄືສະໂມສອນມາຢາມ.
4. ຜູ້ຮັກສາປະຕູ ຕ້ອງໃສ່ເຄື່ອງນຸ່ງທີ່ມີສີແຕກຕ່າງຈາກນັກກິລາທັງສອງສະໂມສອນ ແລະ ກຳມະການຕັດສິນ, ຕ້ອງໃສ່ຊຸດແຂ່ງຂັນທີ່ມີນຳເບີທີ່ຕົວເອງໄດ້ຂຶ້ນທະບຽນສົ່ງໃຫ້ທາງຄະນະຈັດການແຂ່ງຂັນຈົນກວ່າສິ້ນສຸດການແຂ່ງຂັນ.
5. ນັກກິລາທຸກຄົນຕ້ອງໃສ່ເບີເສື້ອ ທີ່ໄດ້ຂຶ້ນທະບຽນໄວ້ດ້ານໜ້າ ແລະ ດ້ານຫຼັງ, ເບີໂສ້ງເອົາໄວ້ດ້ານໜ້າເບື້ອງ ຂວາ, ເບີ ຫຼື ເລກຂອງນັກກິລາຕ້ອງມີສີກົງກັນຂ້າມກັບສີເສື້ອ ຫຼື ສີໂສ້ງ. ເບີເສື້ອມີຄວາມສູງ 25 ຊມ ທາງ ດ້ານຫຼັງ ແລະ 10 ຊມ ທາງດ້ານໜ້າ. ເບີສົ້ງສູງ 10 ຊມ ທາງໜ້າເບື້ອງຂວາ. ນ້ຳເບີຕ້ອງລຽງກັນແຕ່ 1 ຫາ 99 (ເບີ 1 ແມ່ນສະຫງວນໄວ້ໃຫ້ສະເພາະຜູ້ຮັກສາປະຕູເທົ່ານັ້ນ). ສ່ວນຊື່ທີ່ພິມໃສ່ດ້ານຫຼັງເສື້ອ ຕ້ອງກົງ ກັບຊື່ທີ່ລົງທະບຽນ ແລະ ຢູ່ໃນບັດ AD Card. ໃນກໍລະນີເສື້ອແຂ່ງຂັນຂອງສະໂມສອນ ທີ່ບໍ່ມີເບີເສື້ອຢູ່ ດ້ານຫຼັງ ຫຼື ມີເບີເສື້ອທີ່ບໍ່ກົງກັບບັດນັກກິລານັກກິລາຄົນ



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

6. ດັ່ງກ່າວຈະບໍ່ສາມາດລົງແຂ່ງຂັນໄດ້ ແລະ ໃນກໍ ລະນີທີ່ເບີໂສ້ງແຂ່ງຂັນບໍ່ກົງກັບເບີເສື້ອແຂ່ງຂັນ ຫຼື ໂສ້ງບໍ່ມີເບີສາມາດລົງແຂ່ງຂັນ ໄດ້ແຕ່ຈະຖືກປັບໄໝ ເປັນຈຳນວນເງິນ 200,000 (ສອງແສນ)ກີບຕໍ່ຄັ້ງຕໍ່ຄົນໂດຍກຳມະການລະບຽບວິໄນຈະພິຈາລະນາບົດລົງໂທດເພີ່ມ ເຕີມຖ້າຫາກຍັງສືບຕໍ່ກະທຳຜິດໃນກໍລະນີເດີມ. ສະໂມສອນຕ້ອງຊຳລະຄ່າປັບໄໝພາຍໃນ 5 ວັນລັດຖະການຫຼັງຈາກໄດ້ຮັບໜັງສືແຈ້ງຈາກຄະນະຈັດການແຂ່ງຂັນ.

7. ນັກກິລາທຸກໆຄົນຕ້ອງໃສ່ຊຸດແຂ່ງຂັນທີ່ມີເບີເສື້ອ ແລະ ໂສ້ງຂອງຕົວເອງ ທີ່ໄດ້ແຈ້ງຕໍ່ຝ່າຍຈັດການແຂ່ງ ຂັນຂອງ ສຕລ ແລະ ນຳໃຊ້ເບີນັ້ນຈົນກວ່າສິ້ນສຸດລະດູການ ບໍ່ອະນຸຍາດໃຫ້ມີການປ່ຽນແປງ ເບີເສື້ອ ແລະ ໂສ້ງຢ່າງເດັດຂາດ.

7. ຊື່ຂອງນັກກິລາຕ້ອງໃສ່ ດ້ານຫຼັງເສື້ອແຂ່ງຂັນເທິງເບີເສື້ອໂດຍມີຂະໜາດສູງ 7.5 ຊມ ຫຼືດ້ານລຸ່ມຂອງເບີ ເສື້ອກໍ່ໄດ້ ແລະ ມີສີແຕກຕ່າງກັບສີເສື້ອ, ຊື່ນັກກິລາຕ້ອງກົງກັບຊື່ໃນບັດນັກກິລາທີ່ອອກໃຫ້ໂດຍຝ່າຍ ຈັດການແຂ່ງຂັນຈະເປັນພາສາລາວ ຫຼື ພາສາອັງກິດກໍ່ໄດ້, ຖ້າສະໂມສອນໃດບໍ່ໃສ່ຊື່ນັກກິລາໃນເສື້ອແຂ່ງຂັນແມ່ນບໍ່ສາມາດລົງແຂ່ງຂັນໄດ້ເດັດຂາດ.

8. ສະໂມສອນສາມາດໃສ່ຊື່ສະໂມສອນໃນດ້ານຫຼັງຂອງເສື້ອແຂ່ງຂັນໄດ້ແຕ່ຕ້ອງໃສ່ດ້ານລຸ່ມຂອງເບີເສື້ອແຂ່ງຂັນເທົ່ານັ້ນ, ໃນກໍລະນີໃສ່ຊື່ສະໂມສອນຢູ່ດ້ານເທິງເບີເສື້ອແຂ່ງຂັນເສື້ອດັ່ງກ່າວແມ່ນບໍ່ໄດ້ຮັບອະນຸຍາດ ໃຫ້ລົງແຂ່ງຂັນໄດ້ເດັດຂາດ.

9. ເສື້ອແຂ່ງຂັນທີ່ບໍ່ມີກາການແຂ່ງຂັນຕິດແຂນເສື້ອຈະບໍ່ໄດຮັບອະນຸຍາດໃຫ້ນຳໃຊ້ລົງແຂ່ງຂັນໄດ້.




10. ອະນຸຍາດໃຫ້ໃສ່ກາສິນຄ້າຂອງຜູ້ອຸປະຖຳຂອງສະໂມສອນດ້ານໃດກໍ່ໄດ້ ແຕ່ບໍ່ໃຫ້ປິດບັງເບີເສື້ອ ແລະ ສ້າງຄວາມຫຍຸ້ງຍາກໃຫ້ການຕັດສິນຂອງກຳມະການ.

11. ສະໂມສອນສາມາດໃສ່ຊື່ ຫຼື ໂລໂກ້ຂອງຜູ້ອຸປະຖຳຂອງສະໂມສອນຕົວເອງໄດ້ແຕ່ຕ້ອງເປັນບໍລິສັດທີ່ ໄດ້ຮັບການຈົດທະບຽນວິສາຫະກິດຖືກຕ້ອງຕາມກົດໝາຍ ແລະ ຕ້ອງແຈ້ງໃຫ້ຝ່າຍຈັດການແຂ່ງຂັນ ຊາບຢ່າງເປັນລາຍລັກອັກສອນໃນການຈະໃສ່ກາສິ້ນຄ້າໃດໜຶ່ງໃນຊຸດແຂ່ງຂັນເພື່ອໃຫ້ສອດຄ່ອງກັບລະບຽບການແຂ່ງຂັນ.

### ມາດຕາ 22: ຂໍ້ຄວນປະຕິບັດຂອງສະໂມສອນໃນມື້ແຂ່ງຂັນ

1. ສະໂມສອນຕ້ອງເດີນທາງຮອດສະໜາມແຂ່ງຂັນຊ້າສຸດ 90 ນາທີກ່ອນການແຂ່ງຂັນ ແລະ ປະຕິບັດຕາມວາລະການນັບຖອຍຫຼັງສູ່ການແຂ່ງຂັນທີ່ຝ່າຍຈັດການແຂ່ງຂັນກຳນົດໃຫ້, ຖ້າມາຊ້າເກີນ 15 ນາທີໂດຍບໍ່ມີເຫດຜົນຈະຖືກລົງວິໄນຕາມກົດລະບຽບການລົງວິໄນຂອງ ສຕລ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

2. ສະໂມສອນຕ້ອງແຈ້ງລາຍຊື່ນັກກິລາສູງສຸດຈຳນວນ 23 ຄົນທີ່ລະບຸນັກກິລາໂຕຈິງ 11 ຄົນ ແລະ ໂຕສຳຮອງບໍ່ເກີນ 12 ຄົນກ່ອນການແຂ່ງຂັນ 90 ນາທີໃນແຕ່ລະນັດ ຕໍ່ຄະນະຈັດການແຂ່ງຂັນຂອງ ສຕລ ເພື່ອກະກຽມລາຍຊື່ຂອງນັດແຂ່ງຂັນ (Starting List) ແລະ ເອກະສານອື່ນໆທີ່ກ່ຽວຂ້ອງກັບການກະກຽມການແຂ່ງຂັນ. ຖ້າຫາກສະໂມສອນໃດຊັກຊ້າ ຫຼື ກາຍເວລາກຳນົດດັ່ງກ່າວຈະຖືວ່າໃຊ້ລາຍຊື່ນັກກິລາເກົ່າທີ່ມີລາຍຊື່ໃນນັດຜ່ານມາ.
3. ສະໂມສອນໃດມາແຂ່ງຂັນບໍ່ທັນຕາມກຳນົດເວລາຂອງຕາຕະລາງແຂ່ງຂັນຊ້າກວ່າ 15 ນາທີ (ໂດຍບໍ່ມີເຫດຜົນພຽງພໍ) ແມ່ນຖືວ່າສະລະສິດ ແລະ ເສຍນັດດັ່ງກ່າວໃຫ້ກັບຄູ່ແຂ່ງ 0-3 ປະຕູ ພ້ອມທັງຖືກປັບໃໝໂດຍການຊົດໃຊ້ຄ່າເສຍຫາຍໃຫ້ກັບສະໂມສອນມາຢາມ ແລະ ຝ່າຍຈັດການແຂ່ງຂັນຕາມການລົງວິໄນຂອງ ສຕລ.
4. ເຈົ້າໜ້າທີ່ສະໂມສອນທຸກໆທ່ານ ແລະ ນັກກິລາ ຕ້ອງມີ AD Card ໄວ້ເພື່ອສະແດງຕໍ່ຝ່າຍຈັດການແຂ່ງຂັນຖ້າຫາກບໍ່ມີບັດແມ່ນບໍ່ມີສິດນັ່ງຢູ່ໃນບ່ອນນັ່ງສຳຮອງໃນໄລຍະການແຂ່ງຂັນເດັດຂາດ, ອະນຸຍາດໃຫ້ເຈົ້າໜ້າທີ່ສະໂມສອນສູງສຸດ 8 ທ່ານ ແລະ ນັກກິລາຈຳນວນ 12 ທ່ານລວມທັງໝົດ 20 ທ່ານ ເທົ່ານັ້ນທີ່ສາມາດຢູ່ໃນມ້ານັ່ງສຳຮອງໃນໄລຍະການແຂ່ງຂັນ. ສ່ວນທ່ານທີ່ບໍ່ມີລາຍຊື່ໄດ້ຮັບ ອະນຸຍາດໃຫ້ນັ່ງຢູ່ໃນມານັ່ງສຳຮອງແມ່ນບໍ່ອະນຸຍາດໃຫ້ຢູ່ໃນເຂດເຕັກນິກໃນໄລຍະເວລາການແຂ່ງຂັນ.
5. ຫ້າມບໍ່ໃຫ້ບຸກຄົນໃດໜຶ່ງທີ່ບໍ່ມີບັດ AD Card ທີ່ເປັນຂອງຕົວເອງເຂົ້າໄປໃນຫ້ອງຖ່າຍເຄື່ອງຂອງນັກກິລາຢ່າງເດັດຂາດ.
6. ການແຂ່ງຂັນສາມາດເລີ່ມຕົ້ນໄດ້ຕາມກຳນົດເວລາຖ້າສະໂມສອນທີ່ລົງແຂ່ງຂັນມີນັກກິລາ 7 ຄົນຂຶ້ນໄປ.
7. ສະໂມສອນຕ້ອງແຕ່ງຕັ້ງບຸກຄະລາກອນເຂົ້າຮ່ວມການຖະແຫຼງຂ່າວຫຼັງການແຂ່ງຂັນຕາມການແຈ້ງຂອງຝ່າຍຈັດການແຂ່ງຂັນປະຈຳສະໜາມ, ຖ້າບໍ່ປະຕິບັດຕາມສະໂມສອນຈະຖືກປັບໄໝເປັນຈຳນວນເງິນ 500,000 (ຫ້າແສນ)ກີບ/ຄັ້ງ.
8. ອຳນວຍຄວາມສະດວກໃຫ້ກັບເຈົ້າໜ້າທີ່ສື່ມວນຊົນໃນການສຳພາດສັ້ນຫຼັງສິ້ນສຸດການແຂ່ງຂັນ (Flash Interview) ຖ້າບໍ່ປະຕິບັດຕາມສະໂມສອນຈະຖືກປັບໄໝເປັນຈຳນວນເງິນ 500,000 (ຫ້າແສນ) ກີບ/ຄັ້ງ.

**ມາດຕາ 23: ການປ່ຽນໂຕສຳຮອງໃນການແຂ່ງຂັນ**

1. ການປ່ຽນຕົວນັກກິລາສຳຮອງໃນແຕ່ລະນັດການແຂ່ງຂັນແມ່ນບໍ່ເກີນ 5 ຄົນ ແລະ ປ່ຽນໂຕໄດ້ 3 ຄັ້ງ ໃນເວລາແຂ່ງຂັນປົກກະຕິ 90 ນາທີ ແລະ ໃນຊ່ວງພັກການແຂ່ງຂັນເຄິ່ງເວລາທຳອິດ 15 ນາທີ ອີກ 1 ຄັ້ງ.
2. ນັກກິລາທີ່ປ່ຽນອອກມາແລ້ວບໍ່ສາມາດກັບຄືນເຂົ້າໄປຫຼິ້ນໄດ້ອີກ.
3. ສຳລັບໄລຍະເວລາການຕໍ່ເວລາພິເສດ 30 ນາທີ (ນັດຊີງຊະນະເລີດ) ແມ່ນສາມາດເພີ່ມຈຳນວນການປ່ຽນຕົວໄດ້ອີກ 1 ຄັ້ງ ແລະ ນັກກິລາ 1 ຄົນ.
4. ໃນກໍລະນີທີ່ມີນັກກິລາທີມໃດໜຶ່ງເກີດອຸປະຕິເຫດກະທົບຮຸນແຮງບໍລິເວນຫົວໃນລະຫວ່າງການແຂ່ງຂັນ ແລະໄດ້ຮັບການປະເມີນຈາກທີມແພດປະຈຳສະໜາມວ່ານັກກິລາດັ່ງກ່າວນັ້ນບໍ່ສາມາດລົງແຂ່ງຂັນໄດ້ຕໍ່, ໃນກໍລະນີດັ່ງກ່າວ, ສະໂມສອນສາມາດນຳໃຊ້ໂຄຕ້າການປ່ຽນຕົວພິເສດ(Concussion Substitution)ສຳລັບນັກກິລາຜູ້ທີ່ ໄດ້ຮັບບາດເຈັບນັ້ນໄດ້ສູງສຸດ 01 ຄົນ/ນັດ/ສະໂມສອນ ໂດຍກໍລະນີນີ້ຈະບໍ່ລວມກັບການປ່ຽນຕົວປົກກະຕິ, ແຕ່ການປ່ຽນຕົວພິເສດນັ້ນຈະຕ້ອງໄດ້ປ່ຽນຕົວໃນໄລຍະເວລາດັ່ງກ່າວທັນທີພາຍຫຼັງທີ່ໄດ້ຮັບການປະເມີນຈາກທີມແພດປະຈຳສະໜາມວ່າບໍ່ສາມາດລົງຫຼິ້ນໄດ້ຕໍ່. ການປ່ຽນຕົວພິເສດ(Concussion Substitution)ຈະບໍ່ສາມາດນຳໄປລວມກັບການປ່ຽນຕົວປົກກະຕິໄດ້. ເມື່ອມີການນຳໃຊ້ການປ່ຽນຕົວພິເສດ(Concussion Substitution)ຈາກສະໂມສອນໃດໜຶ່ງແລ້ວ, ສະໂມສອນຄູ່ແຂ່ງຂັນແມ່ນສາມາດເພີ່ມການປ່ຽນຕົວສຳຮອງໄດ້ອີກ 01 ຄົນເຊັ່ນກັນ ແລະ ສາມາດນ□າໃຊ້ປ່ຽນຕົວດ້ວຍເຫດຜົນໃດກໍ່ໄດ້ໃນລະຫວ່າງການແຂ່ງຂັນ.


ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

## ພາກທີ V

## ຄຸນສົມບັດ ແລະ ພາລະບົດບາດຂອງນັກກິລາ, ເຈົ້າໜ້າທີ່ສະໂມສອນ ແລະ ການລົງທະບຽນເຂົ້າຮ່ວມການແຂ່ງຂັນ

### ມາດຕາ 24: ຄຸນສົມບັດຂອງນັກກິລາ ແລະ ເຈົ້າໜ້າທີ່ສະໂມສອນ

1. ນັກກິລາ

   **1.1** ນັກກິລາບານເຕະສັນຊາດລາວຕ້ອງມີອາຍຸແຕ່ **17** ປີຂຶ້ນໄປ ແລະ ບໍ່ເກີນ **19** ປີ ເຊິ່ງເກີດໃນປີ **(2006-2008)** (ປັບປຸງ) ເທົ່ານັ້ນຈຶ່ງສາມາດລົງທະບຽນແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີໄດ້.

   **1.2** ນັກກິລາບານເຕະທີ່ສັງກັດໃນສະໂມສອນໃດໜຶ່ງຈະຕ້ອງລົງທະບຽນ ແລະ ເຮັດສັນຍາຮ່ວມກັບສະໂມສອນທີ່ຕົນສັງກັດຢູ່ ໂດຍທີ່ມີໄລຍະເວລາ ແລະ ຄ່າແຮງງານໃນໃບສັນຍາຢ່າງຈະແຈ້ງ.

   **1.3** ນັກກິລາທີ່ລົງແຂ່ງຂັນຢ່າງຖືກຕ້ອງຈະຕ້ອງມີລາຍຊື່ ແລະ ລົງທະບຽນຢູ່ໃນສະໂມສອນທີ່ເຂົ້າຮ່ວມການບານເຕະເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ 2025 ເທົ່ານັ້ນ ແລະ ບໍ່ມີສິດລົງແຂ່ງຂັນໃຫ້ສະໂມສອນອື່ນ ຫຼື ລາຍການອື່ນເດັດຂາດຈົນກວ່າຈະມີການໂອນຍ້າຍ ຢ່າງຖືກຕ້ອງຕາມກົດລະບຽບ ສະບັບນີ້ ໂດຍເອົາສັນຍາຜູກພັນລະຫວ່າງສະໂມສອນກັບນັກກິລາຄົນນັ້ນ, ຄູຝຶກ ຫຼື ຜູ້ຊ່ວຍຈະບໍ່ຖືວ່າ ເປັນນັກກິລາຈຶ່ງຫ້າມລົງແຂ່ງຂັນແຕ່ສາມາດຍົກຍ້າຍໄດ້ຕາມຄວາມຕ້ອງການພາຍຫຼັງໄດ້ຕົກລົງກັນກັບສະໂມສອນທີ່ຕົນສັງກັດຢູ່ນັ້ນ.

   **1.4** ນັກກິລາທີ່ສາມາດເຂົ້າຮ່ວມການແຂ່ງຂັນໄດ້ຕ້ອງບໍ່ເປັນບຸກຄົນທີ່ຢູ່ໃນລາຍຊື່ລົງໂທດຫ້າມເຄື່ອນໄຫວກິດຈະກໍາບານເຕະໂດຍ ສຕລ, AFF, AFC ແລະ FIFA.

2. ເຈົ້າໜ້າທີ່ສະໂມສອນ

   **2.1** ເຈົ້າໜ້າທີ່ສະໂມສອນທີ່ສາມາດລົງທະບຽນເຂົ້າຮ່ວມການແຂ່ງຂັນໄດ້ຕ້ອງເປັນບຸກຄົນທີ່ມີອາຍຸ 19 ປີ ຂຶ້ນໄປໂດຍບໍ່ຈໍາກັດສັນຊາດ.

   **2.2** ຕ້ອງບໍ່ເປັນບຸກຄົນທີ່ຢູ່ໃນລາຍຊື່ລົງໂທດຫ້າມເຄື່ອນໄຫວກິດຈະກໍາບານເຕະໂດຍ ສຕລ, AFF, AFC ແລະ FIFA.

   **2.3** ເຈົ້າໜ້າທີ່ສະໂມສອນໃນປະເພດຄູຝຶກຕ້ອງມີໃບປະກາດວິຊາສະເພາະກ່ຽວກັບໜ້າວຽກຂອງຕົວເອງໃນ ການແຂ່ງຂັນເຊັ່ນ:

   - ຫົວໜ້າຄູຝຶກ (ຄົນລາວ ຫຼື ຄົນຕ່າງປະເທດ): ຕ້ອງມີໃບປະກາດຄູຝຶກລະດັບ 'C' AFC ຂຶ້ນໄປ ຫຼື ທຽບເທົ່າ.
   - ຜູ້ຊ່ວຍຄູຝຶກ (ຄົນລາວ ຫຼື ຄົນຕ່າງປະເທດ): ຕ້ອງມີໃບປະກາດຄູຝຶກລະດັບ 'C' AFC ຂຶ້ນໄປ ຫຼື ທຽບເທົ່າ.
   - ຄູຝຶກຜູ້ຮັກສາປະຕູ (ຄົນລາວ ຫຼື ຄົນຕ່າງປະເທດ): ຕ້ອງມີໃບປະກາດຄູຝຶກລະດັບ C ຂອງ AFC ຂຶ້ນໄປຂຶ້ນໄປ ຫຼື ໃບປະ ກາດຄູຝຶກປະຕູ Level 1 ຂອງ AFC ຫຼືທຽບເທົ່າ.
   - ແພດ: ຕ້ອງມີໃບປະກາສະນີຍະບັດແພດລະດັບຊັ້ນສູງຂຶ້ນໄປ
   - ນັກກາຍະພາບບໍາບັດ: ຕ້ອງມີໃບປະກາດແພດກາຍະບໍາບັດ ແລະ ໃບອະນຸຍາດປະກອບວິຊາຊີບຈາກກະຊວງສາທາລະນະສຸກ.
   - ຄູຝຶກພາລະກໍາລັງ: ຕ້ອງມີໃບປະກາດ ສະເພາະຄູຝຶກພາລະກໍາລັງທີ່ຢັ້ງຢືນໂດຍສະຖາບັນທີ່ໄດ້ຖືກຮັບຮອງໂດຍກົດໝາຍ ສປປ ລາວ ຫຼື ສາກົນ.

   **2.4** ເຈົ້າໜ້າທີ່ສະໂມສອນທຸກຕໍາແໜ່ງຕ້ອງມີຕົວຕົນຈິງ ແລະ ຕ້ອງສາມາດປະຕິບັດໜ້າທີ່ໄດ້ໃນໄລຍະການ ແຂ່ງຂັນ.



ສໍານັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ອຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

2.5 ເຈົ້າໜ້າທີ່ສະໂມສອນທຸກທ່ານຕ້ອງມີສັນຍາແຮງງານກັບສະໂມສອນທີ່ລະບຸໄລຍະເວລາ ແລະ ຄ່າແຮງງານໃນສັນຍາວ່າຈ້າງຢ່າງຈະແຈ້ງ.

2.6 ເຈົ້າໜ້າທີ່ສະໂມສອນທຸກທ່ານຕ້ອງເປັນບຸກຄົນທີ່ບໍ່ມີສັນຍາກັບສະໂມສອນອື່ນໃນການແຂ່ງຂັນລາຍການດຽວກັນ

**ມາດຕາ 25: ພາລະບົດບາດ, ສິດ ແລະ ໜ້າທີ່ຂອງນັກກິລາ, ເຈົ້າໜ້າທີ່, ພະນັກງານ ແລະ ຜູ້ບໍລິຫານສະໂມສອນ**

1. ພາລະບົດບາດ, ສິດ ແລະ ໜ້າທີ່ຂອງນັກກິລາ

 1.1 ນັກກິລາບານເຕະມີພາລະບົດບາດຮັບໃຊ້ສະໂມສອນທີ່ຕົນສັງກັດຢູ່ ແລະ ເຄື່ອນໄຫວແຂ່ງຂັນຢ່າງມີປະສິດທິພາບ, ໂປ່ງໃສ ແລະ ປະຕິບັດຕາມກົດລະບຽບການແຂ່ງຂັນ.

 1.2 ນັກກິລາບານເຕະມີສິດດັ່ງນີ້:

  1.2.1 ໄດ້ຮັບການດູແລເບິ່ງແຍງຈາກສະໂມສອນທີ່ຕົນສັງກັດຕາມສັນຍາ.

  1.2.2 ລົງແຂ່ງຂັນໃຫ້ສະໂມສອນທີ່ຕົນສັງກັດ ຫຼື ທີມຊາດຕາມຄວາມຕ້ອງການຂອງ ສຕລ.

  1.2.3 ໄດ້ຮັບການຍ້ອງຍໍຊົມເຊີຍຕາມຜົນງານການເຄື່ອນໄຫວຈາກຝ່າຍຈັດການແຂ່ງຂັນ ແລະ ສະໂມສອນ.

 1.3 ນັກກິລາບານເຕະມີໜ້າທີ່ດັ່ງນີ້:

  1.3.1 ປະຕິບັດກົດລະບຽບ ແລະ ກະຕິກາການແຂ່ງຂັນທຸກປະການ.

  1.3.2 ຕອບຮັບໂດຍບໍ່ມີເງື່ອນໄຂເມື່ອຖືກຮຽກໂຕມາຮັບໃຊ້ທີມຊາດ.

  1.3.3 ປະຕິບັດສັນຍາຂອງຕົວເອງກັບສະໂມສອນຢ່າງເຕັມທີ່ ແລະ ໂປ່ງໃສ.

  1.3.4 ໃຫ້ຄວາມຮ່ວມມືກັບ ສຕລ ໃນກໍລະນີຖືກເລືອກໃຫ້ເຄື່ອນໄຫວວຽກງານການຕະຫຼາດ ແລະ ສື່ມວນຊົນ.

  1.3.5 ເຂົ້າຮ່ວມກິດຈະກໍາ ຫຼື ກອງປະຊຸມຕາມການແຈ້ງການຂອງ ສຕລ.

  1.3.6 ໃຫ້ຄວາມຮ່ວມມືກັບ ສຕລ ໃນການຕໍ່ຕ້ານປາກົດການຫຍໍ້ທໍ້ໃນກິລາບານເຕະ.

 1.4 ພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ສະໂມສອນ

  1.4.1 ເຈົ້າໜ້າທີ່ສະໂມສອນມີພາລະບົດບາດເຄື່ອນໄຫວຮັບໃຊ້ສະໂມສອນຕົ້ນສັງກັດຕາມພັນທະສັນຍາ ຂອງຕົວເອງກັບສະໂມສອນ ແລະ ປະຕິບັດກົດລະບຽບການແຂ່ງຂັນຢ່າງເຂັ້ມງວດ.

  1.4.2 ເຈົ້າໜ້າທີ່ສະໂມສອນມີສິດ:

   - ໄດ້ຮັບການດູແລເບິ່ງແຍງຈາກສະໂມສອນທີ່ຕົນສັງກັດຕາມສັນຍາ.
   - ປະຕິບັດໜ້າທີ່ໃຫ້ສະໂມສອນທີ່ຕົນສັງກັດ ຫຼື ທີມຊາດຕາມຄວາມຕ້ອງການຂອງ ສຕລ.
   - ໄດ້ຮັບການຍ້ອງຍໍຊົມເຊີຍຕາມຜົນງານການເຄື່ອນໄຫວຈາກຝ່າຍຈັດການແຂ່ງຂັນ ແລະ ສະໂມສອນ.

  1.4.3 ເຈົ້າໜ້າທີ່ສະໂມສອນມີໜ້າທີ່:

   - ປະຕິບັດພັນທະສັນຍາຂອງຕົນກັບສະໂມສອນຢ່າງເຕັມທີ່ ແລະ ໂປ່ງໃສ.
   - ປະຕິບັດກົດລະບຽບການແຂ່ງຂັນຢ່າງເຂັ້ມງວດ.
   - ໃຫ້ຄວາມຮ່ວມມືກັບ ສຕລ ໃນກໍລະນີຖືກເລືອກໃຫ້ເຄື່ອນໄຫວວຽກງານການຕະຫຼາດ ແລະ ສື່ມວນຊົນ.
   - ເຂົ້າຮ່ວມກິດຈະກໍາ ຫຼື ກອງປະຊຸມຕາມການແຈ້ງການຂອງ ສຕລ.
   - ໃຫ້ຄວາມຮ່ວມມືກັບ ສຕລ ໃນການຕໍ່ຕ້ານປາກົດການຫຍໍ້ທໍ້ໃນກິລາບານເຕະ.


ສໍານັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

- ສຶກສາອົບຮົມນັກກິລາຂອງສະໂມສອນຕົວເອງໃຫ້ປະຕິບັດກົດລະບຽບການແຂ່ງຂັນ ແລະ ບໍ່ ຫຍຸ້ງກ່ຽວກັບກິດຈະກໍາທີ່ຂັດກັບກົດລະບຽບການແຂ່ງຂັນ ແລະ ກົດໝາຍຂອງ ສປປ ລາວ.

**1.5** ພາລະບົດບາດ, ສິດ ແລະ ໜ້າທີ່ຂອງພະນັກງານ ແລະ ຜູ້ບໍລິຫານສະໂມສອນ

**1.5.1** ພະນັກງານ ແລະ ຜູ້ບໍລິຫານສະໂມສອນມີພາລະບົດບາດເຄື່ອນໄຫວຮັບໃຊ້ສະໂມສອນຕົ້ນສັງກັດ ຕາມພັນທະສັນຍາຂອງຕົວເອງກັບສະໂມສອນ ແລະ ປະຕິບັດກົດລະບຽບການແຂ່ງຂັນຢ່າງເຂັ້ມ ງວດ.

**1.5.2** ພະນັກງານ ແລະ ຜູ້ບໍລິຫານສະໂມສອນມີສິດ:

- ໄດ້ຮັບການດູແລເບິ່ງແຍງຈາກສະໂມສອນທີ່ຕົນສັງກັດຕາມສັນຍາ.
- ປະຕິບັດໜ້າທີ່ໃຫ້ສະໂມສອນທີ່ຕົນສັງກັດ ຫຼື ທີມຊາດຕາມຄວາມຕ້ອງການຂອງ ສຕລ.
- ໄດ້ຮັບການຍ້ອງຍໍຊົມເຊີຍຕາມຜົນງານການເຄື່ອນໄຫວຈາກຝ່າຍຈັດການແຂ່ງຂັນ ແລະ ສະໂມສອນ.

**1.5.3** ພະນັກງານ ແລະ ຜູ້ບໍລິຫານສະໂມສອນມີໜ້າທີ່:

- ປະຕິບັດພັນທະສັນຍາຂອງຕົນກັບສະໂມສອນຢ່າງເຕັມທີ່ ແລະ ໂປ່ງໃສ.
- ປະຕິບັດກົດລະບຽບການແຂ່ງຂັນຢ່າງເຂັ້ມງວດ.
- ໃຫ້ຄວາມຮ່ວມມືກັບ ສຕລ ໃນກໍລະນີຖືກເລືອກໃຫ້ເຄື່ອນໄຫວວຽກງານການຕະຫຼາດ ແລະ ສື່ມວນຊົນ.
- ເຂົ້າຮ່ວມກິດຈະກໍາ ຫຼື ກອງປະຊຸມຕາມການແຈ້ງການຂອງ ສຕລ.
- ໃຫ້ຄວາມຮ່ວມມືກັບ ສຕລ ໃນການຕໍ່ຕ້ານປາກົດການຫຍໍ້ທໍ້ໃນກິລາບານເຕະ.
- ອໍານວຍຄວາມສະດວກດ້ານເອກະສານການໂອນຍ້າຍຂອງນັກກິລາໃນກໍລະນີມີການໂອນຍ້າຍ.
- ສຶກສາອົບຮົມນັກກິລາຂອງ ແລະ ບຸກຄະລາກອນສະໂມສອນຕົວເອງໃຫ້ປະຕິບັດກົດລະບຽບການແຂ່ງຂັນບໍ່ຫຍຸ້ງກ່ຽວກັບກິດຈະກໍາທີ່ຂັດກັບກົດລະບຽບການແຂ່ງຂັນ ແລະ ກົດໝາຍຂອງ ສປປ ລາວ.

### ມາດຕາ 26: ຂອບເຂດສິດອໍານາດຂອງເຈົ້າໜ້າທີ່ສະໂມສອນໃນການປະສານງານກັບ ສຕລ.

ທຸກໆເອກະສານປະສານງານຂອງສະໂມສອນທີ່ສົ່ງເຖິງ ສຕລ ຕ້ອງປະຕິບັດຕາມຂໍ້ກໍານົດດັ່ງລຸ່ມນີ້ຈຶ່ງຖືວ່າຖືກຕ້ອງ, ມີຜົນນໍາໃຊ້ ແລະ ໄດ້ຮັບການຮັບຮູ້ຈາກ ສຕລ.

1. ເອກະສານທາງການທຸກໆປະເພດຈາກສະໂມສອນສົ່ງເຖິງ ສຕລ ຕ້ອງເຊັນໂດຍປະທານສະໂມສອນ ຫຼື ຮອງປະທານສະໂມສອນເທົ່ານັ້ນ.
2. ໃບສົ່ງລາຍຊື່ນັກກິລາ (Starting List) ໃນມື້ແຂ່ງຂັນຕ້ອງເຊັນໂດຍຫົວໜ້າຄູຝຶກ ແລະ ຜູ້ຈັດການສະໂມສອນ ເທົ່ານັ້ນ.
3. ຮ່າງເອກະສານຂໍປະທ້ວງທີ່ຍື່ນຕໍ່ຜູ້ຄວບຄຸມການແຂ່ງຂັນຕ້ອງເຊັນໂດຍຜູ້ຈັດການສະໂມສອນເທົ່ານັ້ນ.
4. ໜັງສືອະທິບາຍ ຫຼື ຊີ້ແຈງເຫດຜົນການປະທ້ວງທີ່ສະໂມສອນຕ້ອງປະກອບໃສ່ໃນການປະທ້ວງຫຼັງຈາກຍື່ນແບບຟອມຂໍປະທ້ວງແລ້ວນັ້ນຕ້ອງເຊັນໂດຍປະທານ ຫຼື ຮອງປະທານ ສະໂມສອນເທົ່ານັ້ນ.

### ມາດຕາ 27: ການລົງທະບຽນ

1. ການລົງທະບຽນນັກກິລາ.

**1.1** ສະໂມສອນສາມາດລົງທະບຽນນັກກິລາ ໄດ້ສູງສຸດ 23 ຄົນຕໍ່ລະດູການແຂ່ງຂັນ, ສົ່ງລາຍຊື່ໃນມື້ແຂ່ງຂັນໄດ້ 23 ຄົນ (ໂຕຈິງ 11 ຄົນ, ໂຕສໍາຮອງ 12 ຄົນ).

**1.2** ສະໂມສອນສໍາເລັດການລົງທະບຽນນັກກິລາໃນລະບົບລົງທະບຽນຂອງ ສຕລ ຕາມກໍານົດເວລາທີ່ຝ່າຍຈັດການແຂ່ງຂັນກໍານົດ.



ສໍານັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

2. ການລົງທະບຽນເຈົ້າໜ້າທີ່ສະໂມສອນ, ພະນັກງານ ແລະ ຜູ້ບໍລິຫານສະໂມສອນ.

2.1 ການລົງທະບຽນເຈົ້າໜ້າທີ່ສະໂມສອນ.

ສະໂມສອນທີ່ເຂົ້າຮ່ວການແຂ່ງຂັນຕ້ອງລົງທະບຽນເຈົ້າໜ້າທີ່ໄດ້ສູງສຸດບໍ່ເກີນ 8 ທ່ານຕາມລາຍການດັ່ງລຸ່ມນີ້:

- ຫົວໜ້າຄູຝຶກ
- ຜູ້ຊ່ວຍຄູຝຶກ
- ຄູຝຶກປະຕູ
- ແພດ
- ນັກກາຍະພາບບຳບັດ
- ຜູ້ຈັດການສະໂມສອນ
- ຜູ້ດູແລອຸປະກອນ
- ສື່ມວນຊົນປະຈຳສະໂມສອນ

2.2 ການລົງທະບຽນພະນັກງານ ແລະ ຜູ້ບໍລິຫານສະໂມສອນ

ສະໂມສອນໃນການແຂ່ງຂັນສາມາດລົງທະບຽນພະນັກງານ ແລະ ຜູ້ບໍລິຫານສະໂມສອນໄດ້ສູງສຸດ 15 ທ່ານຕາມລາຍລະອຽດດັ່ງລຸ່ມນີ້:

- ປະທານສະໂມສອນ
- ຮອງປະທານສະໂມສອນ
- ຫົວໜ້າເຕັກນິກສະໂມສອນ
- ພະນັກງານການຕະຫຼາດສະໂມສອນ
- ພະນັກງານການເງິນ
- ພະນັກງານຊ່ວຍວຽກບໍລິຫານສະໂມສອນ

2.3 ຂັ້ນຕອນ ແລະ ເອກະສານປະກອບການລົງທະບຽນ

2.3.1 ຂັ້ນຕອນການລົງທະບຽນ

- ສະໂມສອນຕ້ອງສົ່ງເອກະສານລົງທະບຽນຂອງນັກກິລາ ແລະ ພະນັກງານຂອງສະໂມສອນຕາມໃບລົງທະບຽນທີ່ຝ່າຍຈັດການແຂ່ງຂັນກຳນົດໃຫ້ທັນກັບເວລາໃນລະບົບ FIFA CONNECT & CMS.
- ສະໂມສອນຕ້ອງແຕ່ງຕັ້ງຜູ້ຮັບຜິດຊອບການລົງທະບຽນໂດຍສະເພາະບໍ່ໃຫ້ເກີນ 2 ທ່ານ (1 ໃນນັ້ນຕ້ອງເປັນຜູ້ຈັດການສະໂມສອນ) ເຊິ່ງຕ້ອງໄດ້ເຂົ້າຮ່ວມການຝຶກອົບຮົມນຳໃຊ້ລະບົບລົງທະບຽນ ແລະ ຈັດການແຂ່ງ ຂັນທີ່ຝ່າຍຈັດການແຂ່ງຂັນຈັດຂຶ້ນເສຍກ່ອນ.
- ການຖອນຊື່ນັກກິລາອອກຈາກການລົງທະບຽນຂອງສະໂມສອນຕ້ອງເຮັດເປັນລາຍລັກອັກສອນພ້ອມທັງກໍລະນີຍົກເລີກສັນຍາສະໂມສອນຕ້ອງເຮັດໜັງສືຢັ້ງຢືນຍົກເລີກສັນຍາສອງຝ່າຍ ແລະ ສຳເນົາສົ່ງໃຫ້ກັບຝ່າຍຈັດການແຂ່ງຂັນ.
- ສຳຫຼັບ ນັກກິລາ ຫຼື ພະນັກງານສະໂມສອນທີ່ລົງທະບຽນສຳເລັດໃນລະບົບ FIFA CONNECT ແລະ CMS ຈະໄດ້ຮັບລະຫັດປະຈຳໂຕຈາກສະຫະພັນບານເຕະນາໆຊາດ ແລະ ລະຫັດປະຈຳໂຕສະມາຊິກຈາກ



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

ສຕລ. ເຊິ່ງລະຫັດປະຈຳໂຕດັ່ງກ່າວຈະເປັນລະຫັດຂອງຜູ້ກ່ຽວໄປຕະຫຼອດໂດຍມີຂໍ້ກຳນົດວ່າຕ້ອງ ໄດ້ຍື່ນຂໍຕໍ່ການນຳໃຊ້ລະຫັດສະມາຊິກດັ່ງກ່າວກັບ ສຕລ ເປັນປະຈຳທຸກປີ.

2.3.2 ເອກະສານປະກອບການລົງທະບຽນ

- ສັນຍາວ່າຈ້າງ (ສະແກນຈາກຕົ້ນສະບັບເປັນຟາຍ PDF)
- ໃບປະກາດສຳຫຼັບເຈົ້າໜ້າທີ່ສະໂມສອນ (ສະແກນຈາກຕົ້ນສະບັບເປັນຟາຍ PDF)
- ເອກະສານໂອນຍ້າຍສຳລັບນັກກິລາ (ສະແກນຈາກຕົ້ນສະບັບເປັນຟາຍ PDF)
- ບັດປະຈຳໂຕ, ໜັງສືເດີນທາງ ຫຼື ສຳມະໂນຄົວ ທີ່ມີວັນເດືອນປີເກີດ ແລະ ຮູບຖ່າຍທີ່ຊັດເຈນ (ສະແກນຈາກຕົ້ນສະບັບເປັນຟາຍ PDF)
- ຟາຍຮູບສວມໃສ່ຊຸດຂອງສະໂມສອນພື້ນຫຼັງສີຂາວຂະໜາດບໍ່ເກີນ 1 MB (ເປັນຟາຍ JPG)
- ນັກກິລາຕ້ອງມີໃບອະນຸຍາດຈາກຜູ້ປົກຄອງແນບມາໃນໃບສັນຍາ (ກໍລະນີຕໍ່າກວ່າ 18 ປີ ສະແກນຈາກຕົ້ນສະບັບເປັນຟາຍPDF).
- ໃບຢັ້ງຢືນການສຶກສາ ຫຼື ໃບປະກາດ (ສະແກນຈາກຕົ້ນສະບັບເປັນຟາຍ PDF).

**ໝາຍເຫດ:** ທຸກເອກກະສານລົງທະບຽນຕາມຂ້າງເທິງນີ້ຕ້ອງມີເອກກະສານຕົ້ນສະບັບຕິດຄັດມາພ້ອມ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

# ພາກທີ VI

# ມາດຕະການລົງໂທດການກະທຳຜິດກະຕິກາການແຂ່ງຂັນ, ການປະທ້ວງ ແລະ ການອຸທອນ

**ມາດຕາ 28: ມາດຕະການລົງໂທດການກະທຳຜິດກະຕິກາການແຂ່ງຂັນ (ປັບປຸງ)**

1. ບັດເຫຼືອງ ແມ່ນການເຕືອນນັກກິລາໃຫ້ຫຼິ້ນດ້ວຍຄວາມລະມັດລະວັງ, ໃຫ້ຖືກຕາມກະຕິກາ ແລະ ຢູ່ໃນລະບຽບການແຂ່ງຂັນ.
2. ນັກກິລາທີ່ຖືກບັດເຫຼືອງ 3 ບັດ (ໃນນັດການແຂ່ງຂັນຕ່າງກັນ) ນັກກິລາຈະບໍ່ໄດ້ລົງແຂ່ງຂັນ 1 ນັດຕໍ່ໄປ ເອີ້ນວ່າ "ບັດເຫຼືອງສະສົມ" ແລະ ບັດເຫຼືອງຈະຖືກລົບລ້າງທັງໝົດເມື່ອຖືກລົງວິໄນແລ້ວ.
3. ບັດເຫຼືອງ 2ຄັ້ງ, ໃນນັດແຂ່ງຂັນດຽວກັນກາຍເປັນບັດແດງ ເອີ້ນວ່າ "2 ບັດເຫຼືອງເປັນແດງ" ນັກກິລາຈະຖືກສັ່ງອອກຈາກເດີ່ນແຂ່ງຂັນ ແລະ ບໍ່ອະນຸຍາດໃຫ້ນັ່ງຢູ່ໃນເຂດເຕັກນິກ ແລະ ບໍ່ໃຫ້ລົງແຂ່ງຂັນ 2 ນັດຖັດໄປ.
4. ນັກກິລາທີ່ຖືກບັດເຫຼືອງເປັນຄັ້ງທີ 1 ແລະ ຄັ້ງທີ່ 2 ເປັນບັດແດງເລີຍ ເອີ້ນວ່າ 1 ບັດເຫຼືອງ ແລະ 1 ບັດແດງ ໃນນັດດຽວກັນນັ້ນ ນັກກິລາດັ່ງກ່າວ ຈະບໍ່ອະນຸຍາດໃຫ້ລົງແຂ່ງຂັນ 2 ນັດຖັດໄປ ແລະ ບໍ່ອະນຸຍາດໃຫ້ນັ່ງຢູ່ບ່ອນນັ່ງສຳຮອງ ພ້ອມຍັງຮັກສາບັດເຫຼືອງໄວ້ຄືເກົ່າ.
5. ນັກກິລາທີ່ຖືກບັດແດງໃນການແຂ່ງຂັນ ເອີ້ນວ່າ (ບັດແດງໂດຍກົງ) ແມ່ນຈະຖືກສັ່ງອອກຈາກການແຂ່ງຂັນ ແລະ ຈະບໍ່ອະນຸຍາດແຂ່ງຂັນໃນ 2 ນັດຖັດໄປໃນທຸກລາຍການຂອງ ສຕລ ພ້ອມທັງບໍ່ອະນຸຍາດໃຫ້ນັ່ງຢູ່ມ້ານັ່ງຂອງນັກກິລາສຳຮອງຂອງສະໂມສອນຕີນທີ່ລົງທຳການແຂ່ງຂັນຢູ່ນັ້ນ.
6. ສະໂມສອນຈະຖືກປັບໃໝຄ່າບັດເຫຼືອງ 100,000 (ໜຶ່ງແສນ) ກີບ/ບັດ ຕາມຈຳນວນບັດເຫຼືອງທີ່ໄດ້ຮັບໃນແຕ່ລະນັດ ແລະ ໃນກໍລະນີສະໂມສອນໄດ້ບັດແດງ ສະໂມສອນຈະຖືກປັບໃໝ 200,000 (ສອງແສນ) ກີບ/ບັດ ຕາມຈຳນວນບັດແດງທີ່ໄດ້ຮັບ.
7. ໃນກໍລະນີຄະນະນຳ ຫຼື ຄະນະຄູຝຶກຂອງສະໂມສອນໄດ້ຮັບບັດເຫຼືອງ ຫຼື ບັດແດງຈາກກຳມະການຕັດສິນໃນການແຂ່ງຂັນແມ່ນໃຫ້ປະຕິບັດຕາມມາດຕະການດຽວກັນກັບນັກກິລາທີ່ໄດ້ຮັບບັດເຫຼືອງ ຫຼື ບັດແດງໃນການແຂ່ງຂັນ ແລະ ພ້ອມທັງຖືກປັບໃໝເປັນຈຳນວນເງິນ 200,000 (ສອງແສນ) ກີບ/1 ບັດເຫຼືອງ ແລະ 500,000 (ຫ້າແສນ) ກີບຕໍ່ໜຶ່ງບັດແດງ.
8. ໃນກໍລະນີນັກກິລາ, ຄະນະຄູຝຶກ ຫຼື ເຈົ້າໜ້າທີ່ສະໂມສອນຖືກບັດເຫຼືອງ ຫຼື ບັດແດງຈາກກຳມະການໃນນັດໃດນຶ່ງຂອງລາຍການນີ້ໂທດດັ່ງກ່າວຈະມີຜົນບັງຄັບໃຊ້ໃນການແຂ່ງຂັນອື່ນໆຂອງ ສຕລ ດ້ວຍ.

**ມາດຕາ 29: ການປະທ້ວງ (ປັບປຸງ)**

1. ພາຍຫຼັງສິ້ນສຸດການແຂ່ງຂັນ ສະໂມສອນໃດໜຶ່ງຕ້ອງການປະທ້ວງຄຸນສົມບັດຂອງນັກກິລາ ຫຼື ບຸກຄະລາກອນຂອງສະໂມສອນ, ເງື່ອນໄຂອຸປະກອນຂອງການຈັດການແຂ່ງຂັນ (ອຸປະກອນພາກສະໜາມ, ພາກບຸກຄະລາກອນຂອງສະໂມສອນ ທີ່ມີສ່ວນເຮັດໃຫ້ການແຂ່ງຂັນບໍ່ເປັນໄປຕາມລະບຽບການແຂ່ງຂັນ) ແລະ ການກະທຳຜິດຂອງນັກກິລາ ຫຼື ບຸກຄະລາກອນສະໂມສອນທີ່ມີສ່ວນກ່ຽວຂອງກັບການແຂ່ງຂັນ. ສະໂມສອນສາມາດດຳເນີນການປະທ້ວງໂດຍສະ ເໜີຈຸດປະສົງຕໍ່ຜູ້ຄວບຄຸມການແຂ່ງຂັນ ແລະ ເຮັດບົດບັນທຶກພ້ອມທັງລົງລາຍເຊັນເປັນລາຍລັກອັກສອນ ພາຍຫຼັງສິ້ນສຸດການແຂ່ງຂັນບໍ່ເກີນ 2 ຊົ່ວໂມງ, ຫຼັງຈາກນັ້ນໃຫ້ສະໂມສອນຍື່ນຫຼັກຖານປະກອບການປະທ້ວງ ຕໍ່ຄະນະຈັດການ



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານທ້ອຍທົ່ງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

ແຂ່ງຂັນພາຍໃນ 24 ຊົ່ວໂມງນັບແຕ່ການແຂ່ງຂັນສິ້ນສຸດລົງ ພ້ອມດ້ວຍເງິນສົດຈຳນວນ 2,000,000 (ສອງລ້ານ) ກີບ (ໜຶ່ງລ້ານຫ້າແສນກີບ) ຄັດຕິດມາພ້ອມ ແລະ ເພື່ອໃຫ້ຄະນະກ□າມະການຈັດການແຂ່ງຂັນດຳເນີນເລື່ອງສະເໜີຕໍ່ຄະນະກຳມະການວິໄນໃນການພິຈາລະນາການປະທ້ວງດັ່ງກ່າວ. ຖ້າຫາກວ່າການປະກອບເອກະສານ ຫຼື ເງື່ອນໄຂການປະທ້ວງບໍ່ຄົບຖ້ວນຈະບໍ່ນຳເລື່ອງນີ້ຂຶ້ນພິຈາລະນາ. ໃນກໍລະນີສະໂມສອນບໍ່ແຈ້ງເຈດຈຳນົງໃນການປະທ້ວງພາຍຫຼັງສິ້ນສຸດການແຂ່ງຂັນຕາມໄລຍະເວລາທີ່ກຳນົດໄວ້ ແລະ ລວມທັງປະກອບເງື່ອນໄຂກ່ຽວຂ້ອງກັບການປະທ້ວງພາຍຫຼັງແຈ້ງເຈດຈຳນົງໃຫ້ສຳເລັດຕາມເວລາ ຄະນະກຳມະການຈັດການແຂ່ງຂັນຈະຖືວ່າສະໂມສອນສະຫຼະສິດໃນການປະທ້ວງ.

2. ກໍລະນີການປະທ້ວງເປັນຜົນຈຳນວນເງິນດັ່ງກ່າວຈະສົ່ງຄືນໃຫ້ສະໂມສອນຢ່າງຄົບຖ້ວນ.
3. ກໍລະນີຫາກການປະທ້ວງບໍ່ມີເຫດຜົນພຽງພໍຈະຖືວ່າໂມຄະ ແລະ ຝ່າຍຈັດການແຂ່ງຂັນຈະບໍ່ສົ່ງ ເງິນດັ່ງກ່າວຄືນ.
4. ກຳມະການຕັດສິນ ແລະ ຜູ້ຊ່ວຍກຳມະການຕັດສິນ ຈະຖືກປົກປ້ອງໂດຍເຈົ້າໜ້າທີ່ຮັບຜິດຊອບການແຂ່ງຂັນແຕ່ລະນັດ ແລະ ໄດ້ຮັບນະໂຍບາຍອື່ນໆຕາມຄວາມເໝາະສົມ.
5. ສະໂມສອນບໍ່ສາມາດປະທ້ວງການປະຕິບັດໜ້າທີ່ ແລະ ປະທ້ວງໃຫ້ປ່ຽນແປງຄຳຕັດສິນຂອງກຳມະການຕັດສິນໄດ້ໃນຂະນະປະຕິບັດໜ້າທີ່ ແລະ ຫຼັງສິ້ນສຸດການແຂ່ງຂັນ.

**ມາດຕາ 30: ການອຸທອນ (ປັບປຸງ)**

1. ໃນກໍລະນີທີ່ອະນຸກຳມະການວິໄນໄດ້ຕັດສິນລົງໂທດຢ່າງໃດໜຶ່ງຕໍ່ກັບສະໂມສອນ, ນັກກິລາ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງແລ້ວ ແລະ ໄດ້ແຈ້ງໃຫ້ພາກສ່ວນກ່ຽວຂ້ອງທີ່ຖືກລົງໂທດຮັບຊາບແລ້ວ. ຫາກພາກສ່ວນກ່ຽວຂ້ອງທີ່ຖືກລົງໂທດ ຫຼື ຄູ່ກໍລະນີໃນການປະທ້ວງບໍ່ເຫັນດີຕໍ່ກັບຄຳຕັດສິນລົງໂທດດັ່ງກ່າວນັ້ນ. ພາກສ່ວນກ່ຽວຂ້ອງທີ່ຖືກລົງໂທດ ຫຼື ຄູ່ກໍລະນີສາມາດຍື່ນໜັງສືຂໍອຸທອນຕໍ່ຄຳຕັດສິນລົງໂທດດັ່ງກ່າວຕໍ່ຄະນະກຳມະການອຸທອນຂອງ ສຕລ ເຊິ່ງຄຳຮ້ອງຂໍອຸທອນຕ້ອງໄດ້ຍື່ນຜ່ານພະແນກຈັດການແຂ່ງຂັນພາຍໃນ 24 ຊົ່ວໂມງຫຼັງຈາກໄດ້ຮັບແຈ້ງການບົດລົງໂທດຂອງຄະນະກ□າມະການລະບຽບວິໄນ. ໂດຍຕ້ອງປະກອບໜັງສືຂໍອຸທອນ, ຫຼັກຖານທີ່ກ່ຽວຂ້ອງກັບການອຸທອນໂດຍຕ້ອງເປັນຊຸດດຽວກັນທີ່ຍື່ນໃຫ້ກັບອະນຸກຳມະການວິໄນ ແລະ ເງິນສົດຈຳນວນ 2,000,000 (ສອງລ້ານ) ກີບ ຄັດຕິດມາພ້ອມ. ຖ້າການພິຈາລະນາຂອງອະນຸກຳມະການອຸທອນຂອງ ສຕລ ອອກມາມີເຫດຜົນ ສຕລ ຈະສົ່ງເງິນຄືນໃຫ້ຜູ້ຂໍອຸທອນ.
2. ຜົນການພິຈາລະນາຂອງຄະນະກຳມະການອຸທອນຈະເປັນການຕັດສິນຂັ້ນສຸດເຊິ່ງບໍ່ສາມາຂໍອຸທອນໄດ້.
3. ໃນກໍລະນີທີ່ຜູ້ຍື່ນຂໍອຸທອນຍັງບໍ່ເຫັນດີກັບຜົນຂອງການອຸທອນສາມາດດຳເນີນການຕໍ່ໃນຂັ້ນສານກິລາສາກົນ (CAS ຫຼື Court of Arbitration for Sports) ໄດ້ໂດຍສະໂມສອນຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍຂອງການດຳເນີນການຂໍອຸທອນເອງທັງໝົດ.

**ມາດຕາ 31: ມາດຕະການ**

1. ກົດລະບຽບການແຂ່ງຂັນສະບັບນີ້ໄດ້ກຳນົດປະເພດຂອງມາດຕະການ ແລະ ການລົງວິໄນຕໍ່ບຸກຄົນທີ່ເປັນຄະນະຮັບຜິດຊອບ, ນັກກິລາ, ກຳມະການ ແລະ ສະໂມສອນ ຕາມກໍລະນີຂອງການກະທຳຜິດໂດຍຈະຖືກປະຕິບັດວິໄນໃນສະຖານແຕ່ເບົາຫາໜັກຄືດັ່ງລຸ່ມນີ້:
   - ຕັກເຕືອນ, ສຶກສາອົບຮົມ ແລະ ຂຽນໃບສຳຫຼວດ
   - ປັບໄໝຕາມລະບຽບການແຂ່ງຂັນ ແລະ ການລົງວິໄນຂອງ ສຕລ.
   - ໂຈະການເຂົ້າຮ່ວມແຂ່ງຂັນ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານທ້ອຍທົ່ງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

- ຢຸດຕິ ແລະ ຫ້າມເຄື່ອນໄຫວໃນທຸກໆກິດຈະກຳກ່ຽວກັບການແຂ່ງຂັນບານເຕະຂອງ ສຕລ ແຕ່ 1 ປີຈົນເຖິງຕະຫຼອດຊີວິດ.

2. ຄະນະຮັບຜິດຊອບ, ນັກກິລາ ແລະ ສະໂມສອນຈະຖືກຕັກເຕືອນ, ປັບໃໝ ແລະ ປະຕິບັດວິໄນໃນກໍລະນີຕໍ່ໄປນີ້:

**2.1** ຄະນະຮັບຜິດຊອບສະໂມສອນເປັນສ່ວນບຸກຄົນ ຫຼື ທັງໝົດຄະນະທີ່ມີພຶດຕິກຳທ່າທີ ຫຼື ວາຈາທີ່ ຫຍາບຊ້າ, ລົງມືທຳຮ້າຍນັກກິລາຝ່າຍກົງກັນຂ້າມ, ຕໍ່ກຳມະການຕັດສິນ ແລະ ຄະນະຈັດການແຂ່ງຂັນປະຈຳສະໜາມຈະຕ້ອງຖືກລົງວິໄນ ພ້ອມທັງຈະເຮັດບົດລາຍງານສົ່ງໃຫ້ອະນຸກຳມະການວິໄນລົງໂທດເພີ່ມ ຕາມກໍລະນີໜັກ ຫຼື ເບົາ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕາ 32 ແລະ ການລົງວິໄນຂອງ ສຕລ.

**2.2** ຄະນະຮັບຜິດຊອບສະໂມສອນ, ນັກກິລາທີ່ບໍ່ໄດ້ຊຳລະການປັບໄໝຂອງຕົນຈະບໍ່ໄດ້ຮັບອະນຸຍາດໃຫ້ລົງແຂ່ງຂັນ ຫຼື ເຮັດໜ້າທີ່ໃນນັດຕໍ່ໄປຈົນກວ່າ ມີການສຳລະສະສາງຕາມລະບຽບເປັນທີ່ຮຽບຮ້ອຍ.

**2.3** ລາຍຊື່ການແຂ່ງຂັນ (Starting List) ຂອງສະໂມສອນຕ້ອງເຊັນໂດຍຜູ້ຈັດການສະໂມສອນ ແລະ ຫົວໜ້າຄູຝຶກເທົ່ານັ້ນ, ຖ້າສະໂມສອນໃດບໍ່ປະຕິບັດຕາມຈະຖືກປັບໄໝເປັນຈຳນວນເງິນ 200,000 (ສອງແສນ)ກີບ ຕໍ່ຄັ້ງ.

**2.4** ຫົວໜ້າຄູຝຶກຕ້ອງໃຫ້ສຳພາດກັບສື່ມວນຊົນຫຼັງສິ້ນສຸດການແຂ່ງຂັນທຸກນັດ, ຖ້າຫາກຄູຝຶກສະໂມສອນໃດບໍ່ປະຕິບັດຕາມລະບຽບ ສະໂມສອນດັ່ງກ່າວຈະຖືກປັບໃໝເປັນຈຳນວນເງິນ 200,000 (ສອງແສນ)ກີບ ຕໍ່ຄັ້ງ.

**2.5** ຫ້າມຂີດຂ້າ, ປ່ຽນເບີ, ປ່ຽນແປງຊື່ໃໝ່ ໃນແບບຟອມແຂ່ງຂັນ (Starting List) ກ່ອນໄດ້ຮັບອະນຸຍາດຈາກຄະນະຈັດການແຂ່ງຂັນເດັດຂາດ ຖ້າຫາກມີການລະເມີດຈະຖືກຕັກເຕືອນ ຫຼື ປະຕິບັດວິໄນຕາມກົດລະບຽບການລົງວິໄນຂອງ ສຕລ.

**2.6** ສະໂມສອນຖືເປັນຕໍ່ວຽກງານເຕັກນິກການພັດທະນາທີ່ ສຕລ ໄດ້ວາງອອກເຊັ່ນ: ການຝຶກອົບຮົມ, ສຳມະນາ ແລະ ປະຊຸມປຶກສາຫາລືຕ່າງໆໂດຍທີ່ສະໂມສອນບໍ່ເຂົ້າຮ່ວມ ຫຼື ສົ່ງຜູ້ທີ່ບໍ່ໄດ້ຮັບຜິດຊອບວຽກງານດັ່ງກ່າວມາເຂົ້າຮ່ວມ ສະໂມສອນດັ່ງກ່າວຈະຖືກພິຈາລະນາມາດຕະການທາງວິໄນຕາມກົດລະບຽບການລົງວິໄນຂອງ ສຕລ.

**2.7** ຫາກມາດຕະການທາງດ້ານວິໄນທີ່ກຳນົດໄວ້ໃນກົດລະບຽບສະບັບນີ້ບໍ່ຄອບຄຸມເຖິງຄວາມຜິດອື່ນທີ່ເກີດຂຶ້ນພາຍຫຼັງທີ່ຮັບຮອງກົດລະບຽບສະບັບນີ້ ແລະ ກົດລະບຽບການລົງວິໄນຂອງ ສຕລ, ກໍລະນີດັ່ງກ່າວຈະຕົກຢູ່ໃນດຸນພິນິດຂອງອະນຸກຳມະການລະບຽບວິໄນຂອງ ສຕລ ໃນການນຳໃຊ້ມາດຕະການທາງວິໄນໂດຍອີງໃສ່ກົດລະບຽບຂອງ AFC ແລະ FIFA ມາບັງຄັບໃຊ້.

**2.8** ຫ້າມສະໂມສອນ ລວມທັງ ປະທານສະໂມສອນ ບຸກຄົນ, ທີມງານ, ຜູ້ຈັດການທີມ, ນັກກິລາ, ກຳມະການຕັດສິນ ແລະ ບຸກຄົນອື່ນທີ່ໄດ້ລົງທະບຽນ ກັບ ສຕລ ມີສ່ວນກ່ຽວຂ້ອງກັບ ຫຼືມີພຶດຕິກຳທີ່ກ່ຽວຂ້ອງ ກັບການໃຊ້ສານກະຕຸ້ນ, ການລົ້ມບານ (ລ໋ອກຜົນການແຂ່ງຂັນ), ການພະນັນ ຫຼື ມີພຶດຕິກຳອື່ນ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ເຫດຜົນໃດກໍ່ຕາມ ທີ່ສົ່ງຜົນເສຍຫາຍ ຕໍ່ລະບົບແຂ່ງຂັນແມ່ນຈະຖືກດຳເນີນຄະດີ ຕາມກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ (ຊຶ່ງມີໂທດສູງສຸດ ຈຳຄຸກຕະຫລອດຊີວິດ). ບຸກຄົນໃດ ທີ່ໄດ້ຮູ້ວ່າ ມີການກະທຳຜິດ ຕ້ອງລາຍງານ ການກະທຳດັ່ງກ່າວ ໃຫ້ແກ່ ສຕລ ຮັບຊາບໃນທັນໃດທາງເວບໄຊ: (https://www.laoff.org.la/la/report/match_fixing) ຫຼື ທາງຊ່ອງທາງອື່ນທີ່ສະດວກ.

**2.9** ສະໂມສອນທີ່ບໍ່ມາແຂ່ງຂັນຕາມຕາຕະລາງ ຫຼື ມາຮອດສະໜາມແຂ່ງຂັນແລ້ວແຕ່ບໍ່ລົງແຂ່ງຂັນດ້ວຍເຫດຜົນໃດໜຶ່ງທີ່ບໍ່ກ່ຽວກັບອົງປະກອບຈັດການແຂ່ງຂັນ ຈະຖືກປັບໄໝເປັນຈຳນວນເງິນ 3,000,000 (ສາມລ້ານ) ກີບ, ເສຍຄ່າຊົດເຊີຍໃຫ້ແກ່ສະໂມສອນຄູ່ແຂ່ງຂັນ ແລະ ຝ່າຍຈັດການແຂ່ງຂັນຕາມຄວາມເສຍຫາຍຕົວຈິງ ແລະ ຖືກປະຕິບັດວິໄນຕາມກົດລະບຽບການລົງວິໄນຂອງ ສຕລ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

**2.10** ນັກກິລາທີ່ເອົາບັດໃຫ້ຄົນອື່ນລົງແຂ່ງຂັນແທນຈະຖືກລົງໂທດໂດຍບໍ່ໃຫ້ນັກກິລາດັ່ງກ່າວລົງແຂ່ງຂັນອີກ 3 ນັດຖັດໄປ, ຜູ້ໃຫ້ບັດ, ຜູ້ໃຊ້ບັດ ແລະ ສະໂມສອນຈະຖືກລົງວິໄນຕາມກົດລະບຽບການລົງວິໄນຂອງ ສຕລ ແລະ ສະໂມສອນຈະຖືກປັບແພ້ໃນການແຂ່ງຂັນນັດດັ່ງກ່າວ 0-3 ປະຕູ.

**2.11** ນັກກິລາທີ່ລົງແຂ່ງຂັນໂດຍບໍ່ມີບັດນັກກິລາ ຫຼື ຢູ່ໃນຂັ້ນຕອນການປ່ຽນບັດນັກກິລາໃໝ່ ແລະ ໃນກໍລະນີຍົກຍ້າຍໄປສັງກັດສະໂມສອນໃໝ່ເຊິ່ງຢູ່ໃນໄລຍະລໍຖ້າຮັບບັດນັກກິລາໃໝ່ນັ້ນ, ນັກກິລາດັ່ງກ່າວແມ່ນບໍ່ອະນຸຍາດໃຫ້ລົງແຂ່ງຂັນ. ຖ້າຝ່າຝືນຈະຖືກປະຕິບັດວິໄນຕາມລະບຽບການລົງວິໄນຂອງ ສຕລ.

**2.12** ນັກກິລາທີ່ໃຊ້ສານກະຕຸ້ນ, ສິ່ງມຶນເມົາ ແລະ ຢາເສບຕິດຕ່າງໆລົງມາແຂ່ງຂັນ ຜູ້ກ່ຽວຈະຖືກສັ່ງໂຈະລົງແຂ່ງຂັນໂດຍຄະນະກໍາມະການຈັດການແຂ່ງຂັນປະຈໍາສະໜາມ ແລະ ຈະຖືກປະຕິບັດວິໄນຕາມກົດລະບຽບການລົງວິໄນຂອງ ສຕລ.

**2.13** ນັກກິລາທີ່ທໍາຮ້າຍຮ່າງກາຍຄູ່ຕໍ່ສູ້ ຫຼື ເຈົ້າໜ້າທີ່ໃນເວລາການແຂ່ງຂັນຢູ່ສະໜາມຈະຖືກປະຕິບັດວິໄນຕາມລະບຽບການລົງວິໄນຂອງ ສຕລ. ນອກຈາກນັ້ນຜູ້ທີ່ຖືກທໍາຮ້າຍຮ່າງກາຍກໍ່ສາມາດດໍາເນີນຄະດີທາງອາຍາຕໍ່ກັບນັກກິລາຜູ້ທີ່ໄດ້ລົງມືທໍາຮ້າຍຮ່າງກາຍ.

**2.14** ນັກກິລາທີ່ມີພຶດຕິກໍາຢ່າງອອກຈາກເດີ່ນໃນເວລາແຂ່ງຂັນເພື່ອປະທ້ວງການວິນິດໄສຂອງກໍາມະການຕັດສິນ ເປັນບຸກຄົນ ຫຼື ເປັນຄະນະ ແມ່ນຈະຖືກປະຕິບັດວິໄນຕາມລະບຽບການລົງວິໄນຂອງ ສຕລ.

**2.15** ສະໂມສອນ ຫຼື ນັກກິລາທີ່ບໍ່ຍິນຍອມເຂົ້າຮ່ວມການແຂ່ງຂັນຂອງທີມຊາດ ຕາມການແຈ້ງການຂອງ ສຕລ ໂດຍບໍ່ມີເຫດຜົນ; ສຕລ ບໍ່ອະນຸຍາດໃຫ້ສືບຕໍ່ເຂົ້າຮ່ວມການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ຈົນຈົບລະດູການ, ສະໂມສອນຕົ້ນສັງກັດບໍ່ໃຫ້ເຂົ້າຮ່ວມຈະຖືກປະຕິບັດວິໄນຕາມລະບຽບການລົງວິໄນຂອງ ສຕລ ເຊັ່ນກັນ.

**2.16** ເງິນປັບໄໝນັກກິລາຕາມທີ່ກໍານົດໄວ້ໃນກົດລະບຽບສະບັບນີ້ ແລະ ລະບຽບການລົງວິໄນຂອງ ສຕລແມ່ນໃຫ້ສະໂມສອນຕົ້ນສັງກັດຂອງນັກກິລາເປັນຜູ້ຊໍາລະທົດແທນໃຫ້ນັກກິລາພາຍໃນ 7 ວັນລັດຖະການ, ນັບແຕ່ມື້ໄດ້ຮັບແຈ້ງການຈາກ ສຕລ.

**3.** ຄະນະບໍລິຫານງານສະໂມສອນ, ຄະນະຄູຝຶກ ແລະ ນັກກິລາຈະຖືກສັ່ງໂຈະການເຄື່ອນໄຫວໃນໄລຍະລະດູການແຂ່ງຂັນທີ່ກໍາລັງດໍາເນີນການແຂ່ງຂັນ ໃນກໍລະນີດັ່ງຕໍ່ໄປນີ້:

**3.1** ບໍ່ຍອມປະຕິບັດຕາມແຈ້ງການ, ມະຕິຕົກລົງ ຫຼື ຈ່າຍຄ່າປັບໃໝຕາມທີ່ໄດ້ກໍານົດໄວ້ໃນລະບຽບສະບັບນີ້ ແລະ ກົດລະບຽບການລົງວິໄນຂອງ ສຕລ.

**3.2** ປອມແປງເອກະສານການລົງທະບຽນ (ວັນເດືອນປີເກີດໃນ ສໍາມະໂນຄົວ, ບັດປະຈໍາໂຕ ຫຼື ໜັງສືເດີນທາງ). ນັກກິລາ ແລະ ຄະນະຄູຝຶກຈະຖືກຢຸດຕິການປະຕິບັດໜ້າທີ່ໃນການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ໂດຍທັນທີ ແລະ ຄະນະບໍລິຫານງານສະໂມສອນ, ຄະນະຄູຝຶກ ແລະ ນັກກິລາຈະຖືກລົງວິໄນຕາມກົດລະບຽບການລົງວິໄນຂອງ ສຕລ.

**3.3** ໃນກໍລະນີເຈດຕະນາສ້າງຄວາມເສຍຫາຍຕໍ່ກຽດສັກສີ, ຊື່ສຽງ ແລະ ຊັບສິນ ຂອງ ສຕລໃນຮູບການຕ່າງໆດ້ວຍຮູບການລົງຂ່າວ ແລະ ເຜີຍແຜ່ຂໍ້ມູນຂ່າວສານທີ່ບິດເບືອນຄວາມຈິງ, ສຽດສີ ແລະ ໃສ່ຮ້າຍປ້າຍສີໃນສື່ອອນໄລຕາມຊ່ອງທາງຕ່າງໆເຊັ່ນ: ເຟສບຸກ, ອິນສະແກຣມ, ທະວິດເຕີ, ວັອດແອັບ, ຕິກຕອກ, ຢູທູບ,... ແລະ ອື່ນໆ, ຄະນະບໍລິຫານງານສະໂມສອນ, ຄະນະຄູຝຶກ ແລະ ນັກກິລາທີ່ລົງທະບຽນໃນການແຂ່ງຂັນຂອງ ສຕລ ຈະຖືກໂຈະການເຄື່ອນໄຫວໃນໄລຍະລະດູການແຂ່ງຂັນທີ່ກໍາລັງດໍາເນີນການແຂ່ງຂັນໂດຍທັນທີ ແລະຈະຖືກປະຕິວິໄນຕາມກົດລະບຽບການລົງວິໄນຂອງ ສຕລ ແລະ ສຕລ ສາມາດດໍາເນີນຄະດີຕາມກົດໝາຍຕໍ່ກັບບຸກຄົນດັ່ງກ່າວໄດ້.



ສໍານັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

## ພາກທີ ___

## ບົດບັນຍັດສຸດທ້າຍ

**ມາດຕາ 32: ບົດບັນຍັດສຸດທ້າຍ**

1. ສະໂມສອນໃດທີ່ຈະເຂົ້າຮ່ວມການແຂ່ງຂັນບານເຕະ ເຢົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ຕ້ອງໄດ້ປະຕິບັດຕາມກົດລະບຽບສະບັບນີ້, ຂໍ້ກຳນົດເພີ່ມເຕີມທີ 1, ທີ 2, ທີ 3 ຂອງກົດລະບຽບສະບັບສະບັບນີ້ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ ຂອງ ສຕລ ຢ່າງເຄັ່ງຄັດ.
2. ກົດລະບຽບສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ສະຫະພັນບານເຕະແຫ່ງຊາດລາວ**

**ປະທານ**

ສ.ຕ.ລ LAO FOOTBALL FEDERATION

ວິເພັດ ສີຫາຈັກຣ



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

# ຂໍ້ກຳນົດເພີ່ມເຕີມທີ 1

## ນະໂຍບາຍອຸດໜູນສະໂມສອນ, ເງິນລາງວັນ ແລະ ລາງວັນໃນການແຂ່ງຂັນ

ການອຸດໜູນສະໂມສອນໃນການແຂ່ງຂັນຈະແບ່ງອອກເປັນ 2 ປະເພດດັ່ງລຸ່ມນີ້:

**1. ເງິນອຸດໜູນສະໂມສອນ.**

**1.1** ສະໂມສອນທີ່ລົງທະບຽນສຳເລັດ ແລະ ເຂົ້າຮ່ວມການແຂ່ງຂັນຈະໄດ້ຮັບເງິນອຸດໜູນໃນການບໍລິຫານສະໂມສອນ ໂດຍອີງຕາມມະຕິຕົກລົງຂອງຄະນະບໍລິຫານງານ ສຕລ;

**1.1.1.** ເງິນອຸດໜູນທີ່ໄດ້ຮັບຈາກ ສຕລ ແມ່ນໃຫ້ນຳໃຊ້ເປັນຄ່າໃຊ້ຈ່າຍໃນການບໍລິຫານສະໂມສອນທີ່ກ່ຽວຂ້ອງກັບແຂ່ງຂັນ.

**1.1.2.** ສຕລ ຈະເບີກຈ່າຍເງິນອຸດໜູນເປັນງວດດຽວ, ໂດຍການໂອນເຂົ້າບັນຊີທະນາຄານທີ່ອອກຊື່ຂອງສະໂມສອນ ແລະ ສະໂມສອນຕ້ອງໄດ້ສະຫຼຸບລາຍຈ່າຍນີ້ສົ່ງໃຫ້ ສຕລ ໂດຍຜ່ານພະແນກຈັດການແຂ່ງຂັນຂອງ ສຕລ 30 ວັນຫຼັງຈາກສຳເລັດການແຂ່ງຂັນ.

**1.1.3.** ງົບປະມານການອຸດໜູນສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນບານເຕະ ເຍົາວະຊົນ ຮຸ່ນອາຍຸບໍ່ເກີນ 19 ປີ ປະຈຳປີ 2025 ແມ່ນຈະໄດ້ຮັບງົບປະມານອຸດໜູນສະໂມສອນຈຳນວນ 15,000,000 (ສິບຫ້າລ້ານ) ກີບ/ລະດູການ, ສຳລັບສະໂມສອນທີ່ເດີນທາງມາຈາກຕ່າງແຂວງແມ່ນ ເຂົ້າພັກທີ່ຫໍພັກທີ່ສູນຝຶກບານເຕະຫ້ວຍຫົງ.

**1.1.4.** ສະໂມສອນທີ່ເດີນທາງມາຈາກຕ່າງແຂວງແມ່ນຈະໄດ້ຮັບເງິນອຸດໜູນຄ່າເດີນທາງໃຫ້ສະໂມສອນໃນໄລຍະການແຂ່ງຂັນຕາມກົດລະບຽບຂອງການເງິນ ສຕລ.

**2. ລາງວັນ.**

**2.1** ເງິນລາງວັນປະເພດສະໂມສອນ

**2.1.1** ສະໂມສອນທີ່ໄດ້ຊະນະເລີດ ໄດ້ຮັບເງິນລາງວັນ 50,000,000 (ຫ້າສິບລ້ານ) ກີບ ພ້ອມຂັນ 1 ໜ່ວຍ ແລະ ຫຼຽນຊະນະເລີດ

**2.1.2** ສະໂມສອນທີ່ໄດ້ຮອງຊະນະເລີດ ໄດ້ຮັບເງິນລາງວັນ 25,000,000 (ຊາວຫ້າລ້ານ) ກີບ, ພ້ອມຫຼຽນລາງວັນ

**2.1.3** ສະໂມສອນທີ່ໄດ້ຮອງອັນດັບ 2 ໄດ້ຮັບເງິນລາງວັນ 15,000,000 (ສິບຫ້າລ້ານ) ກີບ, ພ້ອມຫຼຽນລາງວັນ

**2.2** ລາງວັນປະເພດບຸກຄົນ:

| | |
|---|---|
| **2.2.1** ນັກກິລາທີ່ຍິງປະຕູສູງສຸດ | ໄດ້ຮັບຂັນລາງວັນ 1 ໜ່ວຍ . |
| **2.2.2** ຜູ້ຮັກສາປະຕູດີເດັ່ນ | ໄດ້ຮັບຂັນລາງວັນ 1 ໜ່ວຍ. |
| **2.2.3** ຄູຝຶກດີເດັ່ນ | ໄດ້ຮັບຂັນລາງວັນ 1 ໜ່ວຍ. |
| **2.2.4** ນັກກິລາດີເດັ່ນປະຈຳນັດແຂ່ງຂັນ | ໄດ້ຮັບຂັນລາງວັນ 1 ໜ່ວຍ. |

**2.3** ໃນກໍລະນີການແຂ່ງຂັນຖືກຍົກເລີກ ຫຼື ຢຸດຕິການແຂ່ງຂັນເນື່ອງຈາກເຫດສຸດວິໄສ, ຫຼື ການແຜ່ລະບາດຂອງເຊື້ອພະຍາດ ຫຼື ມີແຈ້ງການຫ້າມຈັດການແຂ່ງຂັນກິລາບານເຕະຂອງອຳນາດການປົກຄອງທ້ອງຖິ່ນ/ລັດຖະບານ, ອະນຸກຳມະການຈັດການແຂ່ງຂັນປະຈຳ ສຕລ ຈະໄດ້ມີການປະຊຸມຮ່ວມກັບສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນບານເຕະ ເຍົາວະຊົນ ຊິງຂັນ ສຕລ ຮຸ່ນອາຍຸບໍ່ເກີນ 19 ປີ ເພື່ອປະກອບຄຳເຫັນກ່ອນການສະເໜີໃຫ້ຄະນະບໍລິຫານງານ ສຕລ ຕັດສິນຜົນຂອງການແຂ່ງຂັນ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງກັບການແຂ່ງຂັນ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

## ຂໍ້ກຳນົດເພີ່ມເຕີມທີ 2

## ຕົວຢ່າງສັນຍາວ່າຈ້າງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
*************************

ກາສະໂມສອນ

# (ຮ່າງ) ສັນຍາແຮງງານ

ສັນຍາສະບັບນີ້ ເຮັດຂຶ້ນທີ່ ________________ ໃນວັນທີ____________________ (**"ວັນທີມີຜົນສັກສິດ"**) ໂດຍ ແລະ ລະຫວ່າງ:

**ຝ່າຍ ກ:** **ສະໂມສອນ**________________ (ເອີ້ນຫຍໍ້ວ່າ "________"), ສະໂມສອນບານເຕະ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ແລະ ດຳເນີນກິດຈະການ ຢ່າງຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ຕາມໃບທະບຽນວິສາຫະກິດ ເລກທີ________/_____, ລົງວັນທີ__________________, ມີຫ້ອງການຈົດທະບຽນຕັ້ງຢູ່ ບ້ານ________________, ເມືອງ____________________, ແຂວງ______________, ສປປ ລາວ ຕູ້ ປ.ນ________,ໂທລະສັບ:_______________, ແຟັກ:___________________ ອີເມວ:__________________ (ຕໍ່ໄປນີ້ເອີ້ນວ່າ **"ຜູ້ໃຊ້ແຮງງານ ຫຼື ສະໂມສອນ"**.

ແລະ

**ຝ່າຍ ຂ:** **ທ້າວ**________________, ອາຍຸ_________ປີ, ອາຊີບ________ສັນຊາດ_______ປັດຈຸບັນຢູ່ບ້ານ__________, ເຮືອນເລກທີ________, ເມືອງ________________,ແຂວງ____________, ໂທລະສັບມືຖື______________, ອີເມວ__________________, ຈັດເຂົ້າສຳມະໂນຄົວເລກທີ_________ລົງວັນທີ_______________ອອກໂດຍ ປກສ ເມືອງ______________, ແຂວງ________________, ຖືບັດປະຈຳໂຕ/ໜັງສືເດີນທາງເລກທີ________________, ລົງວັນທີ_______________ອອກໂດຍ ປກສ ແຂວງ__________ (ຕໍ່ໄປນີ້ເອີ້ນວ່າ **"ຜູ້ອອກແຮງງານ" ຫຼື "ນັກກິລາ")**

ຝ່າຍ ກ ແລະ ຝ່າຍ ຂ ຕໍ່ໄປນີ້ເອີ້ນລວມກັນວ່າ **"ຄູ່ສັນຍາທັງສອງຝ່າຍ"** ແລະ ເອີ້ນແຍກກັນວ່າ **"ຄູ່ສັນຍາ ຝ່າຍໃດໜຶ່ງ"**.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

## ຂໍ້ກຳນົດເພີ່ມເຕີມທີ 3

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# [ຮ່າງ] ໃບອະນຸຍາດຈາກຜູ້ປົກຄອງ

ຂ້າພະເຈົ້າ ທ້າວ/ນາງ........................................................ອາຍຸ.............ປີ, ສັນຊາດ ................ສະຖານະຜູ້ປົກຄອງທ້າວ.................................ບ້ານຢູ່ປັດຈຸບັນ..............................ເມືອງ ............................ແຂວງ.....................................ຈົດເຂົ້າສ□ານະໂນຄົວເລກທີ..................ລົງວັນທີ ........................................

ຂ້າພະເຈົ້າເຫັນດີອະນຸຍາດໃຫ້ **ທ້າວ/ນາງ**................................................... ອາຍຸ................ປີ, ວັນ/ເດືອນ/ປີ ເກີດ................................... ສະຖານະເປັນ...............................ທີ່ຜູ້ກ່ຽວຢູ່ໃນການປົກຄອງ ຂອງຂ້າພະເຈົ້າຢ່າງແທ້ຈິງ ເພື່ອເຂົ້າຮ່ວມເປັນນັກກິລາບານເຕະໃຫ້ກັບສະໂມສອນ ....................................................... ໃນການເຂົ້າຮ່ວມການແຂ່ງຂັນ ..............................................................................................................

ດັ່ງນັ້ນ, ຈຶ່ງໄດ້ເຮັດໃບອະນຸຍາດສະບັບນີ້ໄວ້ເພື່ອເປັນຫຼັກຖານ.

ທີ່..............................ວັນທີ..........................

<u>**ລາຍເຊັນຜູ້ປົກຄອງ**</u>



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

# ອະລຳພະບົດ

ກ. ເນື່ອງຈາກວ່າ ສະໂມສອນ ມີຄວາມຕ້ອງການໃຊ້ ບໍລິການ ຂອງ ນັກກິລາ ໃນນາມເປັນນັກເຕະບານມື ອາຊີບໃຫ້ແກ່ ສະໂມສອນ; ແລະ

ຂ. ນັກກິລາ ມີຄວາມຕ້ອງການໃຫ້ ສະໂມສອນວ່າຈ້າງ ຕາມເງື່ອນໄຂ ແລະ ຂໍ້ກຳນົດທີ່ໄດ້ລະບຸໄວ້ ໃນສັນຍາ ສະບັບນີ້.

**ດັ່ງນັ້ນ**, ເພື່ອເປັນການຕອບແທນ ການໃຫ້ຄຳໝັ້ນສັນຍາ ແລະ ການຕົກລົງ ທີ່ລະບຸໄວ້ໃນສັນຍາສະບັບນີ້ ຄູ່ສັນຍາ ທັງສອງ ຝ່າຍ ຈຶ່ງໄດ້ຕົກລົງກັນດັ່ງລຸ່ມນີ້:

## ມາດຕາ 1. ກຳນົດເວລາຂອງສັນຍາ

### 1.1 ກຳນົດເວລາ

ສັນຍາສະບັບນີ້ ເລີ່ມຂຶ້ນໃນວັນທີມີຜົນສັກສິດ ຕາມທີ່ໄດ້ລະບຸໄວ້ຂ້າງເທິງ ຊຶ່ງຈະສືບຕໍ່ເປັນກຳນົດເວລາ__________ ປີ ແລະ ຈະສິ້ນສຸດລົງໃນວັນທີ_______________________.

### 1.2 ການຕໍ່ກຳນົດເວລາ

ສັນຍາສະບັບນີ້ ສາມາດຕໍ່ ກຳນົດເວລາ ຫຼັງຈາກ ທີ່ມີການຕົກລົງເຫັນດີຂອງ ຄູ່ສັນຍາ ທັງສອງຝ່າຍ. ສະໂມສອນ ມີສິດກ່ອນ ໝູ່ໃນການປະຕິເສດການຕໍ່ສັນຍາສະບັບນີ້. ຢ່າງໜ້ອຍ________ວັນ ກ່ອນການສິ້ນສຸດ ກຳນົດເວລາຂອງສັນຍາໃນປັດຈຸບັນ , ສະໂມສອນ ຕ້ອງສະໜອງຂໍ້ສະເໜີເປັນລາຍລັກອັກສອນ ເພື່ອຕໍ່ສັນຍາ ໃຫ້ແກ່ ນັກກິລາ ຖ້າຫາກ ສະໂມສອນ ມີຈຸດປະສົງ ຕໍ່ສັນຍາສະບັບນີ້. ນັກກິລາ ມີເວລາ ________ ວັນ ເພື່ອຕອບຮັບ ຫຼື ປະຕິເສດ ຂໍ້ສະເໜີ ຂອງ ສະໂມສອນ. ຖ້າຫາກ ນັກກິລາ ປະຕິເສດຂໍ້ສະເໜີດັ່ງກ່າວ ຫຼື ບໍ່ຕອບກັບ ພາຍໃນກຳນົດເວລາທີ່ ລະບຸໄວ້, ຖືວ່າສັນຍາສະບັບນີ້ ໄດ້ສິ້ນສຸດ.

## ມາດຕາ 2. ເງິນເດືອນ/ ຄ່າແຮງງານ

1.2 ສະໂມສອນ ຕ້ອງຈ່າຍ ເງິນເດືອນ ໃຫ້ນັກກິລາຈຳນວນ_________(ເປັນຕົວໜັງສື:_____________) ກີບ ຕໍ່ ເດືອນ ໃນທຸກໆ ວັນທີ ___________ຂອງ ແຕ່ລະເດືອນ. ໃນກໍລະນີທີ່ວັນດັ່ງກ່າວ ຫາກເປັນວັນພັກ, ການເບີກ ຈ່າຍເງິນເດືອນນັ້ນ ຕ້ອງເຮັດຂຶ້ນໃນວັນ ລັດຖະການກ່ອນໜ້າ.

1.3 ສະໂມສອນ ຈະໂອນເງິນເດືອນ ແລະ ເງິນນະໂຍບາຍອື່ນໆ ຕາມສັນຍາສະບັບນີ້ ໃຫ້ແກ່ ນັກກິລາ ໂດຍໂອນເງິນ ເຂົ້າບັນຊີທະນາຄານ ລຸ່ມນີ້:

- ຊື່ທະນາຄານ:____________________________
- ຊື່ບັນຊີ:_______________________________
- ເລກບັນຊີ:_____________________________
- Swift Code: ____________________________
- ທີ່ຢູ່ທະນາຄານ:__________________________



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານທ່ອຍທົ່ງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

1.4 ນອກຈາກ ສະຫວັດດີການ ຫຼື ນະໂຍບາຍຕ່າງໆທີ່ນັກກິລາ ຈະໄດ້ຮັບ ຕາມກົດໝາຍ ແຮງງານ ແລະ ລະບຽບການອື່ນໆ ທີ່ມີຜົນບັງຄັບໃຊ້, ສະໂມສອນ ມີນະໂຍບາຍ ແລະ ສະຫວັດດີການໃຫ້ແກ່ ຜູ້ອອກແຮງງານ ດັ່ງລຸ່ມນີ້:

1.4.1 ນະໂຍບາຍກ່ຽວກັບ ວັນພັກ____________________ [ລະບຸລາຍລະອຽດຢ່າງຊັດເຈນ]

1.4.2 ຜູ້ອອກແຮງງານຈະໄດ້ຮັບໂບນັດ (ເງິນພິເສດ) ຈຳນວນທັງໝົດ ____________________ ກີບ ໂດຍມີລາຍລະອຽດລຸ່ມນີ້:

- **ຄ່າລົງເຕະ:** ຈຳນວນ_________ ສຳລັບ ແຕ່ລະນັດທີ່ເປັນທາງການ ທີ່ນັກເຕະ ໄດ້ລົງຫຼິ້ນໃຫ້ສະໂມສອນ ຢ່າງໜ້ອຍ ___________ນາທີ.

- **ໂບນັດຈາກການຍິງປະຕູ:** ___________ ຕໍ່ລູກ ທີ່ນັກເຕະຍິງໄດ້ ໃນນັດການແຂ່ງຂັນທີ່ເປັນທາງການ.

- **ໂບນັດຈາກການເປັນແຊັມ:** ຖ້າຫາກ ສະໂມສອນ ເປັນແຊ້ມ______________ນັກເຕະຈະໄດ້ຮັບໂບນັດ ໃນ ຈຳນວນ_________________.

## ມາດຕາ 3. ໜ້າທີ່ ແລະ ຄວາມຮັບຜິດຊອບ

### 3.1 ການຝຶກຊ້ອມ

ນັກກິລາ ຕ້ອງເຂົ້າຮ່ວມ ການຝຶກຊ້ອມທັງໝົດ ທີ່ກຳນົດໂດຍທີມງານຄູຝຶກຂອງສະໂມສອນ ແລະ ຕ້ອງປະຕິບັດຕາມໂຄງການຝຶກອົບຮົມ ແລະ ການຝຶກຊ້ອມ ທີ່ຈັດຂຶ້ນ ໂດຍສະໂມສອນ.

### 3.2 ການແຂ່ງຂັນ

ນັກກິລາ ຕ້ອງເຂົ້າຮ່ວມ ການແຂ່ງຂັນທີ່ເປັນທາງການ ທີ່ໄດ້ຖືກຄັດເລືອກ ຈາກທີມງານຄູຝຶກຂອງ ສະໂມສອນ.

### 3.3 ກົດຈັນຍາບັນ

ນັກກິລາ ຕ້ອງປະຕິບັດຕາມ ກົດຈັນຍາບັນຂອງ ສະໂມສອນ ຊຶ່ງສຳເນົາໄດ້ຄັດຕິດມາພ້ອມນີ້ ເປັນເອກະສານຊ້ອນທ້າຍ ກ. [ຄັດຕິດລາຍລະອຽດ ຂອງ ກົດຈັນຍາບັນ].

### 3.4 ຄວາມຟິດ ແລະ ສະພາບຮ່າງກາຍ

ນັກເຕະ ຕ້ອງຮັກສາ ຄວາມຟິດ ສະພາບຮ່າງກາຍ ໃຫ້ຢູ່ໃນລະດັບສູງ ແລະ ຕ້ອງຜ່ານການກວດຄວາມຟິດ ແລະ ກາຍະພາບ ຕາມທີ່ສະໂມສອນກຳນົດຢ່າງສົມເຫດສົມຜົນ.

### 3.5 ການປະກົດຕົວຕໍ່ສາທາລະນະຊົນ

ນັກເຕະ ຕ້ອງປະກົດຕົວ ຕໍ່ສາທາລະນະຊົນ ຕາມທີ່ໄດ້ຮ້ອງຂໍ ຈາກ ສະໂມສອນ ເພື່ອຈຸດປະສົງ ການສົ່ງເສີມທາງການຕະຫຼາດ ແລະ ຈຸດປະສົງອື່ນໆ.



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

## ມາດຕາ 4. ການກວດຮ່າງກາຍ ແລະ ປະກັນໄພ

### 4.1 ປະກັນໄພສຸຂະພາບ

ສະໂມສອນ ຕ້ອງຊື້ ປະກັນໄພສຸຂະພາບ ທີ່ຄຸ້ມຄອງ ຄອບຄຸມໃຫ້ແກ່ ນັກກິລາ ລວມທັງ [ໃຫ້ລະບຸ ສິ່ງທີ່ຈະລວມຢູ່ໃນນັ້ນ - ການປິ່ນປົວຢູ່ໂຮງໝໍ, ການຜ່າຕັດ ແລະ ອື່ນໆ] ຕາມ ກົດໝາຍທີ່ບັງຄັບໃຊ້. ສັນຍາປະກັນໄພ ແມ່ນໄດ້ຄັດຕິດມາພ້ອມນີ້ ເປັນເອກະສານຊ້ອນທ້າຍ ຂ ຂອງ ສັນຍາສະບັບນີ້.

### 4.2 ການກວດຮ່າງກາຍ

ນັກກິລາ ຕ້ອງຜ່ານການກວດຮ່າງກາຍກ່ອນການເປີດລະດູການ ແລະ ການກວດຮ່າງກາຍອື່ນໆທີ່ສະໂມສອນເຫັນວ່າ ຈຳເປັນ ຢ່າງສົມເຫດສົມຜົນ. ຄ່າໃຊ້ຈ່າຍ ແມ່ນຄວາມຮັບຜິດຊອບຂອງ ສະໂມສອນ.

## ມາດຕາ 5. ວິໄນ

### 5.1 ການປະຕິບັດວິໄນ

ນັກກິລາ ແມ່ນຢູ່ ພາຍໃຕ້ ການດຳເນີນການທາງວິໄນ ຂອງ ສະໂມສອນ ທີ່ໄດ້ລະບຸລາຍລະອຽດ ໃນເອກະສານຊ້ອນທ້າຍ ຄ. [ຄັດຕິດການດຳເນີນການທາງວິໄນລະອຽດ].

### 5.2 ການປັບໃໝ

[ໃຫ້ລະບຸ ການກຳນົດ ການປັບໃໝ ສຳລັບ ແຕ່ລະການລະເມີດ ສັນຍາ ຫຼື ກົດຈັນຍາບັນ.]

### 5.3 ການໂຈະ

[ໃຫ້ລະບຸ ສາເຫດການໂຈະ ແລະ ກຳນົດເວລາ ສຳລັບ ການໂຈະດັ່ງກ່າວ]

## ມາດຕາ 6. ສິດທາງດ້ານຮູບພາບ ແລະ ການເຜີຍແຜ່ຕໍ່ສາທາລະນະຊົນ

### 6.1 ກຳມະສິດ

ສະໂມສອນ ແມ່ນເປັນເຈົ້າຂອງ ສິດທັງໝົດຕໍ່ຮູບພາບ ແລະ ຄວາມຄ້າຍຄືກັນ ຂອງ ນັກກິລາ ທີ່ກ່ຽວຂ້ອງກັບ ກິດຈະກຳ ຂອງ ນັກກິລາ ໃນນາມເປັນນັກກິລາ ໃຫ້ແກ່ ສະໂມສອນ.

### 6.2 ການນຳໃຊ້

ສະໂມສອນ ສາມາດນຳໃຊ້ ຮູບພາບ ແລະ ຄວາມຄ້າຍຄືກັນ ກ່ຽວກັບ [ໃຫ້ລະບຸ ການນຳໃຊ້ທີ່ໄດ້ຮັບອະນຸຍາດ ເຊັ່ນເພື່ອ ສິ່ງເສີມທີມ, ການໂຄສະນາ, ການຄ້າ ແລະ ອື່ນໆ].

### 6.3 ຄ່າຕອບແທນ

[ໃຫ້ລະບຸ ຖ້າຫາກ ນັກກິລາ ໄດ້ນັບຄ່າຕອບແທນເພີ່ມເຕີມ ສຳລັບ ການນຳໃຊ້ ສິດໃນຮູບຂອງ ນັກເຕະ.]



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

## ມາດຕາ 7. ການຍົກເລີກສັນຍາ

[ໃຫ້ກຳນົດສາເຫດຂອງ ການຍົກເລີກສັນຍາ ໂດຍຄູ່ສັນຍາຝ່າຍໃດໜຶ່ງ ລວມທັງ ການລະເມີດສັນຍາທີ່ຮ້າຍແຮງ, ການປະພຶດ ທີ່ບໍ່ເໝາະສົມ ແລະ ອື່ນໆ].

### 7.3 ການລະເມີດສັນຍາ

[ໃຫ້ລະບຸການແກ້ໄຂ ສຳລັບ ການລະເມີດສັນຍາ ລວມທັງ ບົດລົງໂທດ ທາງການເງິນທີ່ເປັນໄປໄດ້.]

## ມາດຕາ 8. ກົດໝາຍຄຸ້ມຄອງ ແລະ ການແກ້ໄຂຂໍ້ຂັດແຍ່ງ

### 8.1 ກົດໝາຍຄຸ້ມຄອງ

ສັນຍາສະບັບນີ້ ໄດ້ຮັບການຄຸ້ມຄອງ, ຕີຄວາມໝາຍ ແລະ ບັບຄັບປະຕິບັດ ຕາມກົດໝາຍ ຂອງ ສປປ ລາວ.

### 8.2 ການແກ້ໄຂຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງໃດໆກໍຕາມທີ່ເກີດຂຶ້ນ ພາຍໃຕ້ ສັນຍາສະບັບນີ້ ຕ້ອງໄດ້ຮັບການແກ້ໄຂ ໂດຍຜ່ານ [ໃຫ້ລະບຸວິທີການແກ້ໄຂຂໍ້ຂັດແຍ່ງ- ການໄກ່ເກ່ຍ ຈາກນັ້ນ ການຕັດສິນດ້ວຍຄະນະກຳມະການຕັດສິນ ຫຼື ການຮ້ອງຟ້ອງໄປຍັງສານ ຂອງ ລາວ.]

## ມາດຕາ 9. ສັນຍາທັງໝົດ

ສັນຍາ ສະບັບນີ້ ປະກອບເປັນຄວາມເຂົ້າໃຈທັງໝົດ ລະຫວ່າງ ຄູ່ສັນຍາທັງສອງຝ່າຍ ແລະ ປ່ຽນແທນການຕົກລົງ ແລະ ຄວາມເຂົ້າໃຈທັງໝົດ ບໍ່ວ່າຈະເປັນລາຍລັກອັກສອນ ຫຼື ທາງປາກເປົ່າ. ບໍ່ມີການດັດແກ້ໃດໃນສັນຍາສະບັບນີ້ ຈະນຳໃຊ້ໄດ້ ເວັ້ນເສຍແຕ່ ເປັນລາຍລັກອັກສອນ ແລະ ໄດ້ລົງລາຍເຊັນ ໂດຍ ຄູ່ສັນຍາທັງສອງຝ່າຍ.

## ມາດຕາ 10. ສ່ວນໃດໜຶ່ງຂອງສັນຍາທີ່ເປັນໂມຄະ

ຖ້າຫາກ ຂໍ້ກຳນົດໃດໜຶ່ງ ຂອງ ສັນຍາສະບັບນີ້ ຖືວ່າ ບໍ່ສາມາດນຳໃຊ້ໄດ້ ຫຼື ບໍ່ສາມາດບັງຄັບປະຕິບັດໄດ້, ຂໍ້ກຳນົດທີ່ຍັງເຫຼືອ ຂອງ ສັນຍາສະບັບນີ້ ຕ້ອງຍັງຄົງມີຜົນສັກສິດ ແລະ ມີຜົນບັງຄັບໃຊ້ເຕັມສ່ວນ.

## ມາດຕາ 11. ເຫດສຸດວິໄສ

ບໍ່ມີຄູ່ສັນຍາຝ່າຍໃດ ຈະຮັບຜິດຊອບ ຕໍ່ ຄວາມລົ້ມເຫຼວ ໃນການປະຕິບັດພັນທະຂອງຕົນ ພາຍໃຕ້ ສັນຍາສະບັບນີ້ ຖ້າຫາກ ການລົ້ມເຫຼວ ດັ່ງກ່າວ ແມ່ນມີສາເຫດ ມາຈາກ ເຫດສຸດວິໄສ (ຕົວຢ່າງ: ໄພທຳມະຊາດ, ສົງຄາມ, ການນັດຢຸດງານປະທ້ວງ).

## ມາດຕາ 12. ການມອບໝາຍ

ສັນຍາສະບັບນີ້ ບໍ່ສາມາດ ມອບ ໂດຍຄູ່ສັນຍາຝ່າຍໃດໜຶ່ງ ໂດຍບໍ່ມີຄຳຍິນຍອມເປັນລາຍລັກອັກສອນ ກ່ອນ ຂອງ ຄູ່ສັນຍາອີກຝ່າຍ.

## ມາດຕາ 13. ແຈ້ງການ

ແຈ້ງການທັງໝົດ ທີ່ຈຳເປັນ ຫຼື ໄດ້ຮັບອະນຸຍາດ ພາຍໃຕ້ ສັນຍາສະບັບນີ້ ຕ້ອງເຮັດຂຶ້ນເປັນລາຍລັກອັກສອນ ແລະ ຕ້ອງຖືວ່າ ໄດ້ນຳສົ່ງ ເມື່ອ [ໃຫ້ລະບຸ ວິທີການນຳສົ່ງ - ສົ່ງດ້ວຍຕົນເອງ, ທາງອີເມວ, ໄປສະນີຈົດທະບຽນ ແລະ ອື່ນໆ].



ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ວຍຫົງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la

**ມາດຕາ 14. ພາສາ**

ສັນຍາສະບັບນີ້ ແມ່ນໄດ້ເຮັດຂຶ້ນເປັນພາສາລາວ ແລະ ພາສາອັງກິດ. ໃນກໍລະນີທີ່ ມີຄວາມບໍ່ສອດຄ່ອງກັນ ລະຫວ່າງ ສະບັບພາສາອັງກິດ ແລະ ສະບັບ ພາສາລາວ, ສະບັບພາສາລາວ ຈະເປັນບ່ອນອີງ.

**ເພື່ອເປັນຫຼັກຖານ**, ຄູ່ສັນຍາທັງສອງຝ່າຍ ໄດ້ເຮັດສັນຍາສະບັບນີ້ ໃນວັນທີ ທີ່ກ່າວໄວ້ໃນເບື້ອງຕົ້ນ ຂ້າງເທິງ.

**ສໍາລັບ ແລະ ໃນນາມ ຝ່າຍ ກ**

**ສະໂມສອນ**____________________

ຊື່:

ຕໍາແໜ່ງ:

**ສໍາລັບ ແລະ ໃນນາມ ຝ່າຍ ຂ**

____________________________

**ພະຍານ 1:**____________________________

ຊື່:

**ພະຍານ 2:**____________________________

ຊື່:

**ພະຍານ 3:**____________________________

ຊື່:



ສໍານັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດລາວ, ບ້ານຫ້ອຍຫົງ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ, ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 5266 415, ແຟັກ: +856-21-560820, ອີເມວ: contact@laoff.org.la